| **ຕະຖາວະຫັງ ມະຣິສສາມິ** | ເຮົາກໍຈະຕ້ອງຕາຍຊຸ້ນນັ້ນເໝືອນກັນ |
| **ນັຕຖິ ເມ ເອຖະ ສັງສະໂຍ ຕິ.** | ຄວາມສົງສັຍໃນເຣື່ອງຕາຍນີ້ ບໍ່ມີແກ່ເຮົາເລີຍ, ດັ່ງນີ້. |

## 5.3 ອະພິນຫະປັຈຈະເວກຂະນະປາຖະ

**(ທັນທະ ມະຍັງ ອະພິນຫະປັຈຈະເວກຂະນະປາຖັງ ພະນາມະ ເສ)**

**ຊະຣາທັມໂມມະຫິ ຊະຣັງ ອະນະຕີໂຕ (ຕີຕາ)**[4] ເຮົາມີຄວາມແກ່ເປັນທັມມະດາ ຈະລ່ວງພົ້ນຄວາມແກ່ໄປບໍ່ໄດ້

**ພະຍາທິທັມໂມມະຫິ ພະຍາທິງ ອະນະຕີໂຕ (ຕີຕາ)** ເຮົາມີຄວາມເຈັບໄຂ້ເປັນທັມມະດາ ຈະລ່ວງພົ້ນຄວາມເຈັບໄຂ້ ໄປບໍ່ໄດ້

**ມະຣະນະທັມໂມມະຫິ ມະຣະນັງ ອະນະຕີໂຕ (ຕີຕາ)** ເຮົາມີຄວາມຕາຍເປັນທັມມະດາ ຈະລ່ວງພົ້ນຄວາມຕາຍໄປບໍ່ໄດ້

**ສັບເພຫິ ເມ ປີເຍຫິ ມະນາເປຫິ ນານາພາໂວ ວິນາພາໂວ** ເຮົາຈະລະເວັ້ນເປັນຕ່າງໆ ຄື ວ່າ, ເຮົາຈະຕ້ອງພັດພາກ ຈາກຂອງຮັກຂອງຈະເຣີນໃຈທັງຫລາຍທັງປວງ

**ກັມມັສສະໂກມະຫິ ກັມມະທາຍາໂທ ກັມມະໂຍນີ ກັມມະພັນທຸ ກັມມະປະຕິສາຣະໂນ** ເຮົາມີກັມເປັນຂອງໆຕົນ, ມີກັມເປັນຜູ້ໃຫ້ຜົລ, ມີກັມເປັນແດນເກີດ, ມີກັມເປັນຜູ້ຕິດຕາມ, ມີກັມເປັນທີ່ເພິ່ງອາສັຍ

**ຍັງ ກັມມັງ ກະຣິສສາມິ, ກັລລະຍານັງ ວາ ປາປະກັງ ວາ, ຕັສສະ ທາຍາໂທ ພະວິສສາມິ** ເຮົາທຳກັມອັນໃດໄວ້, ເປັນບຸນຫລື ເປັນບາບ, ເຮົາຈະເປັນທາຍາດ, ຄືວ່າ ເຮົາຈະຕ້ອງໄດ້ຮັບຜົລຂອງກັມນັ້ນໆສືບໄປ

**ເອວັງ ອັມມະເຫຫິ ອະພິນຫັງ ປັຈຈະເວກຂິຕັພພັງ** ເຮົາທັງຫລາຍຄວນພິຈາຣະນາຢ່າງນີ້ທຸກໆວັນ ເທີ້ນ.

---

[4] ສຳລັບຜູ້ຍິງປ່ຽນ **ຕີໂຕ** ເປັນ**(ຕີຕາ)**

# 5.4 ອັປປະມາທະທັມມະຄາຖາ

(ທັນທະ ມະຍັງ ອັປປະມາທະທັມມະຄາຖາໂຍ ພະນາມະ ເສ)

ອັປປະມາໂທ ອະມະຕັງ ປະທັງ ປະມາໂທ ມັຈຈຸໂນ ປະທັງ

ອັປປະມັຕຕາ ນະ ມີຍັນຕິ ເຍ ປະມັຕຕາ ຍະຖາ ມະຕາ

ຄວາມບໍ່ປມາດເປັນທາງບໍ່ຕາຍ, ຄວາມປມາດເປັນທາງແຫ່ງຄວາມຕາຍ

ຊົນທັງຫລາຍຜູ້ບໍ່ປມາດແລ້ວ ຊື່ວ່າຍ່ອມບໍ່ຕາຍ, ຜູ້ຊຶ່ງປມາດແລ້ວກໍເໝືອນຄົນຕາຍແລ້ວ

ເອຕັງ ວິເສສະໂຕ ຍັຕຕະວາ ອັປປະມາທັມຫິ ປັນທິຕາ

ອັປປະມາເທ ປະໂມທັນຕິ ອະຣິຍານັງ ໂຄຈະເຣ ຣະຕາ

ບັນດິດທັງຫລາຍ ຊາບຄວາມຂໍ້ນັ້ນໂດຍແຕກຕ່າງກັນແລ້ວ, ຕັ້ງຢູ່ໃນຄວາມບໍ່ປມາດ,

ຍິນດີແລ້ວໃນທັມ, ອັນເປັນໂຄຈອນຂອງພຣະອະຣິຍະເຈົ້າທັງຫລາຍ

ເຕ ຊາຍິໂນ ສາຕຕິກາ ນິຈຈັງ ທັລຫະປະຣັກກະມາ

ຜຸສັນຕິ ທີຣາ ນິພພານັງ ໂຍຄັກເຂມັງ ອະນຸຕຕະຣັງ

ບັນດິດຜູ້ເປັນນັກປາດເຫລົ່ານັ້ນ, ເພັ່ງພິຈາຣະນາທັມ, ມີຄວາມພຽນອັນຕິດຕໍ່ກັນ, ມີຄວາມບາກບັ່ນໝັ້ນ

ເປັນນິຈ, ຍ່ອມຖືກຕ້ອງພຣະນິພພານ, ອັນກະເສມຈາກໂຍຄະ, ຫາທັມອື່ນຍິ່ງກວ່າບໍ່ໄດ້

# 5.5 ສັງເວຄະອິທະຊີວິຕະຄາຖາ

(ຫັນທະ ມະຍັງ ສັງເວຄະອິທະຊີວິຕະ ຄາຖາໂຍ ພະນາມະ ເສ)

**ອັປປະມາຍຸ ມະນຸສສານັງ ຫີເລຍຍະນັງ ສຸໂປຣິໂສ**

ອາຍຸຂອງໝູ່ມະນຸສນີ້ໜ້ອຍນັກ, ຜູ້ໃຄ່ຄຸນງາມຄວາມດີ ຄວນຈະດູໝິ່ນອາຍຸທີ່ໜ້ອຍນີ້ຈນີ້

**ຈະເຣຍຍະ ທິຕະສິໂສວະ ນັຕຖິ ມັຈຈຸສສະ ນາຄະໂມ**

ເພິ່ງຮີບປະພຶດຕົນໃຫ້ເໝືອນຄົນຖືກໄຟໄໝ້ເທິງຫົວເຖີດ, ເພາະຄວາມຕາຍຈະບໍ່ມາເຖິງເຮົານັ້ນບໍ່ມີ

**ອັຈຈະຍັນຕິ ອະໂຫຣັຕຕາ ຊີວິຕັງ ອຸປະຣຸຊຊະຕິ**

ວັນຄືນກໍລ່ວງເລີຍໄປ ຊີວິຕກໍໃກ້ສູ່ຄວາມຕາຍ

**ອາຍຸຂີຍະຕິ ມັຈຈານັງ ກຸນນະທີນັງ ວາ ອຸທະກັນຕິ**

ອາຍຸຂອງສັຕທັງຫລາຍຍ່ອມສິ້ນໄປ, ເໝືອນນ້ຳໃນແມ່ນ້ຳໜ້ອຍ, ໄຫລເລື້ອຍໆຍ່ອມໝົດສິ້ນໄປ

**ນະ ເຫວະ ຕິດຖັງ ນາສີນັງ ນະ ສະຍານັງ ນະ ປັຕຖະຄຸງ**

ອາຍຸສັງຂາຣຈະຮວມປມາດໄປກັບມະນຸສທັງຫລາຍ, ທີ່ນົວຍືນຍ່າງນັ່ງນອນຢູ່ກໍຫາບໍ່ໄດ້

**ຕັສສະມາ ອິທະ ຊີວິຕະເສເສ** ເພາະເຫຕນັ້ນແລ ຊີວິຕທີ່ຍັງເຫລືອຢູ່ນີ້

**ກິຈຈະກະໂຣ ສິຍາ ນະໂຣ ນະ ຈະ ມັຊຊະຕິ** ເພິ່ງຮີບກະທຳຄວາມດີຕາມໜ້າທີ່ຂອງຕົນ, ຢ່າໄດ້ປມາດເລີຍ

**ອິຕິ...** ດ້ວຍປະການ ສະນີ້ແລ.

# 5.6 ທັມມະປະຣິຍາຍະ

**(ທັນທະ ມະຍັງ ທັມມະປະຣິຍາຍະ ຄາຖາໂຍ ພະນາມະ ເສ)**

**ສັບເພ ສັຕຕາ ມະຣິສສັນຕິ ມະຣະນັນຕັງ ຫິ ຊີວິຕັງ**

ສັຕທັງຫລາຍທັງສິ້ນຈັກຕ້ອງຕາຍ ເພາະຊີວິຕນີ້ມີຄວາມຕາຍເປັນທີ່ສຸດຮອບ

**ຍະຖາກັມມັງ ປັຕຕະວາ ມະຣະນັງ ເອວັງ ທັມມາ ຫິ ປານິໂນ**

ແມ່ນຈະຢູ່ໄດ້ເຖິງຊະຣາກໍຕ້ອງຕາຍ, ເພາະສັຕທັງຫລາຍ ຍ່ອມເປັນຢ່າງນີ້ຕາມທັມມະດາ

**ຍະມະກັງ ນາມະຣູປັນຈະ ອຸໂພ ອັນໂຍຍະນິສສະສິຕາ**

ກໍນາມແລະຮູບຄືກາຍກັບໃຈ, ຍ່ອມອາສັຍກັນຢູ່ເປັນຂອງຄູ່ກັນ

**ເອກັສສະມິງ ພິຊຊະມານັສສະມິງ ອຸໂພ ພິຊຊັນຕິ ປັຈຈະຍາຕິ**

ເມື່ອຝ່າຍໃດຝ່າຍນຶ່ງແຕກສລາຍ, ທັງ ໔ ຝ່າຍກໍສລາຍໄປດ້ວຍກັນ

**ຍະຖາປິ ອັນຍະຕະຣັງ ພີຊັງ ເຂຕເຕ ວຸຕຕັງ ວິຣູຫະຕິ**

ປຽບເໝືອນພືຊຢ່າງໃດຢ່າງນຶ່ງ, ທີ່ຫວ່ານລົງແລ້ວໃນພື້ນແຜ່ນດິນ, ຍ່ອມງອກຂຶ້ນໄດ້

**ປະຖະວີຣະສັນຈະ ອາຄັມມະ ສິເນຫັນຈະ ຕະທູພະຍັງ**

ເພາະອາສັຍຣົສແຫ່ງແຜ່ນດິນ ແລະເຊື້ອໃນຢາງແຫ່ງພືຊນັ້ນໆ

**ເອວັງ ຂັນທາ ຈະ ທາຕຸໂຍ ຊະ ຈະ ອາຍະຕະນະ ອິເມ**

ຂັນທັງ ໕ ແລະທາດທັງຫລາຍ, ພ້ອມທັງອາຍະຕະນະທັງ ໖ ນີ້ກໍເໝືອນກັນ

**ເຫຕຸງ ປະຕິຈຈະ ສັມພູຕາ ເຫຕຸພັງຄາ ນິຣຸຊຊະເຣ**

ອາສັຍເຫດຈຶ່ງເກີດຂຶ້ນໄດ້, ເມື່ອເຫດນັ້ນແຕກສລາຍກໍຍ່ອມດັບໄປ

**ຍະຖາ ຫິ ອັງຄະສັມພາຣາ ໂຫຕິ ສັທໂທ ຣະໂຖ ອິຕິ**

ປຽບເໝືອນການປະກອບຊິ້ນສ່ວນຂອງຣົຖເຂົ້າດ້ວຍກັນ, ຄຳຮຽກວ່າຣົຖກໍມີຂຶ້ນໄດ້

**ເອວັງ ຂັນເທສຸ ສັນເຕສຸ ໂຫຕິ ສັຕໂຕຕິ ສັມມະຕິ**

ເມື່ອຂັນທັງ ໕ ຍັງມີຢູ່ກໍເໝືອນກັນ, ຄາສົມມຸດວ່າຄົນແລະສັດກໍມີຂຶ້ນໄດ້

**ອຸໂພ ປຸນຍັນຈະ ປາປັນຈະ ຍັງ ມັຈໂຈ ກຸຣຸເຕ ອິທະ**

ເມື່ອຜູ້ທີ່ຕາຍໄປ ທຳບຸນແລະບາບໃດໆ ໃນໂລກນີ້ແລ້ວ

**ຕັນຫິ ຕັສສະ ສະກັງ ໂຫຕິ ຕັນຈະ ອາທາຍະ ຄັຈສະຕິ**

ບຸນແລະບາບນັ້ນແລ ຍ່ອມເປັນຂອງໆເຂົາຜູ້ນັ້ນໂດຍແທ້, ເຂົາຍ່ອມໄດ້ຮັບບຸນ ແລະບາບນັ້ນແນ່ນອນ

**ຕັນຈັສສະ ອະນຸຄັງ ໂຫຕິ ສາຍາວະ ອະນຸປາຍິນີ**

ບຸນແລະບາບນັ້ນຍ່ອມຕິດຕາມເຂົາໄປ, ເໝືອນເງົາຕາມຕົວເຂົາໄປ ສັນນັ້ນ

**ສັທທາຍະ ສີເລນະ ຈະ ໂຍ ປະວັດທະຕິ** ຜູ້ໃດຈະເຣີນດ້ວຍສີລ ແລະມີສັທທາ

**ປັນຍາຍະ ຈາຄະນະ ສຸເຕນະ ຈູພະຍັງ** ເປັນຜູ້ມີປັນຍາ ສະດັບສຶກສາໃນການເສັຽສລະ

**ໂສ ຕາທິໂສ ສັປປຸຣິໂສ ວິຈັກຂະໂນ** ບຸກຄົນຜູ້ເປັນສັຕບຸຣຸດ, ເປັນຜູ້ສຽບແຫລມເຊັ່ນນັ້ນ

**ອາຫີຍະຕິ ສາຣະມິທເທວະ ອັຕຕະໂນ** ຍ່ອມເປັນຜູ້ຖືເອົາປໂຍດແຫ່ງຕົນ ໃນໂລກນີ້ໄວ້ໄດ້ໂດຍແທ້

**ອັຊເຊວະ ກິຈຈະມາຕັປປັງ ໂກ ຊັນຍາ ມະຣະນັງ ສຸເວ**

ຄວາມພາກພຽນໃນສິ່ງດີງາມ ເປັນກິຈທີ່ຕ້ອງທຳໃນວັນນີ້, ໃຜຈະຮູ້ຄວາມຕາຍແມ່ນມື້ອື່ນນີ້

**ນະ ຫິ ໂນ ສັງຄະຣັນເຕນະ ມະຫາເສເນນະ ມັຈຈຸນາ**

ເພາະການພັດພັ້ງນຕໍ່ມັຈຈຸຣາຊ ຊຶ່ງມີເສນາມາກ, ຍ່ອມບໍ່ມີສຳລັບເຮົາ

**ເອວັມພູເຕສຸ ເປຍເຕສຸ ສາທຸ ຕັຕຖາຂຸຊຸປະກຂະນາ**

ເມື່ອສັງຂາຣເຫລົ່ານັ້ນຕ້ອງເປັນຢ່າງນີ້ແນ່ນອນ, ການວາງເສີຍໃນສັງຂາຣເສັຽໄດ້ ຍ່ອມເປັນການດີ

**ອະປິ ເຕສັງ ນິໂຣທາຍະ ປະຕິປັຕຕະຍາຕິ ສາທຸກາ**

ອັນນຶ່ງ ການປະຕິບັຕເພື່ອດັບສັງຂາຣເສັຽໄດ້ຍິ່ງເປັນການດີ

**ສັພພັງ ສັມປາທະນີຍັນທີ ອັປປະມາເທນະ ສັພພະທາຕິ**

ກິຈທັງສິ້ນນີ້ຈະເພິ່ງບຳເພັນໃຫ້ບໍຣິບູນໄດ້ ດ້ວຍຄວາມບໍ່ປມາດທຸກເມື່ອເທົ່ານັ້ນແລ ດັ່ງນີ້.

# 5.7 ມຸງຄຸນ 38

(ທັນທະ ນະຍັງ ມັງຄະລະສຸດຕະຄາຖາໂຍ ພະນາມະ ເສ)

| | |
|---|---|
| ພະຫູ ເທວາ ມະນຸສສາ ຈະ | ເທວະດາ ແລະມະນຸສເປັນອັນມາກ |
| ມັງຄະລານິ ອະຈິນຕະຍຸງ ອາກັງຂະມານາ | ຜູ້ຫວັງຄວາມເປັນສຸກ ໄດ້ພາກັນຄິດເຖິງເຣື່ອງມຸງຄຸນ |
| ໂສຕຖານັງ | ອັນເປັນເຫດໃຫ້ເຖິງຄວາມຈະເຣີນທັງຫລາຍ |
| ພຣູຫິ ມັງຄະລະມຸດຕະມັງ | ຂໍພຣະອົງຕຣັສບອກມຸງຄຸນ ອັນສູງສຸດດ້ວຍເຖີດ |
| ໑. ອະເສວະນາ ຈະ ພາລະນັງ | ການບໍ່ຄົບຄົນພານທັງຫລາຍດ້ວຍ |
| ປັນທິຕານັນຈະ ເສວະນາ | ການຄົບບັນດິດທັງຫລາຍດ້ວຍ |
| ປູຊາ ຈະ ປູຊະນີຍານັງ | ການບູຊາຊົນຄວນບູຊາທັງຫລາຍດ້ວຍ |
| ເອຕັມມັງຄະລະມຸດຕະມັງ | ກິຈ ໓ ຢ່າງນີ້ເປັນມຸງຄຸນອັນສູງສຸດ. |
| ໒. ປະຕິຣູປະເທສະວາໂສ ຈະ | ການຢູ່ໃນປະເທດອັນສົມຄວນດ້ວຍ |
| ປຸພເພ ຈະ ກະຕະປຸນຍະຕາ | ການເປັນຜູ້ມີບຸນອັນທຳແລ້ວໃນກາລກ່ອນດ້ວຍ |
| ອັຕຕະສັມມາປະນິທິ ຈະ | ການຕັ້ງຕົນໄວ້ຊອບດ້ວຍ |
| ເອຕັມມັງຄະລະມຸດຕະມັງ | ກິຈ ໓ ຢ່າງນີ້ເປັນມຸງຄຸນອັນສູງສຸດ. |

| | |
|---|---|
| ໓. ພາຫຸສັຈຈັນຈະ | ການເປັນຜູ້ໄດ້ຍິນໄດ້ຟັງມາກດ້ວຍ |
| ສິປປັນຈະ | ການມີສິລປະສາດວິທະຍາດ້ວຍ |
| ວິນະໂຍ ຈະ ສຸສິກຂິໂຕ | ວິນັຍອັນຊົນສຶກສາດີແລ້ວດ້ວຍ |
| ສຸພາສິຕາ ຈະ ຍາ ວາຈາ | ວາຈາອັນຊົນກ່າວດີແລ້ວດ້ວຍ |
| ເອຕັມມັງຄະລະມຸຕຕະມັງ | ກິຈ ໔ ຢ່າງນີ້ເປັນມຸງຄຸນອັນສູງສຸດ. |
| ໔. ມາຕາປິຕຸອຸປັຕຖານັງ | ການບຳລຸງລ້ຽງມາຣດາບິດາດ້ວຍ |
| ປຸຕຕະທາຣັສສະ ສັງຄະໂຫ | ການສົງເຄາະບຸຕແລະພັລຍາດ້ວຍ |
| ອະນາກຸລາ ຈະ ກັມມັນຕາ | ການທຳການງານບໍ່ຄ້າງຄາດ້ວຍ |
| ເອຕັມມັງຄະລະມຸຕຕະມັງ | ກິຈ ໓ ຢ່າງນີ້ເປັນມຸງຄຸນອັນສູງສຸດ. |
| ໕. ທານັນ ຈະ | ການບຳເພັນທານດ້ວຍ |
| ທັມມະຈາຣິຍາ ຈະ | ການປະພຶດທັມດ້ວຍ |
| ຍາຕະການັນຈະ ສັງຄະໂຫ | ການສົງເຄາະໝູ່ຍາຕທັງຫລາຍດ້ວຍ |
| ອະນະວັຊຊານິ ກັມມານິ | ການງານທັງຫລາຍບໍ່ມີໂທດດ້ວຍ |
| ເອຕັມມັງຄະລະມຸຕຕະມັງ | ກິຈ ໔ ຢ່າງນີ້ເປັນມຸງຄຸນອັນສູງສຸດ. |
| ໖. ອາຣະຕີ ວິຣະຕີ ປາປາ | ການງົດເວັ້ນຈາກບາບກັມດ້ວຍ |

| | |
|---|---|
| ມັຊຊະປານາ ຈະ ສັນຍະໂມ | ການສຳຣວມຈາກການດື່ມນ້ຳເມົາດ້ວຍ |
| ອັປປະມາໂທ ຈະ ທັມເມສຸ | ການບໍ່ປມາດໃນທັມທັງຫລາຍດ້ວຍ |
| ເອຕັມມັງຄະລະມຸຕຕະມັງ | ກິຈ ໓ ຢ່າງນີ້ເປັນມຸງຄຸນອັນສູງສຸດ. |
| ໗. ຄາຣະໂວ ຈະ | ຄວາມເຄົາຣົບດ້ວຍ |
| ນິວາໂຕ ຈະ | ຄວາມບໍ່ຈອງຫອງດ້ວຍ |
| ສັນຕຸດຖີ ຈະ | ຄວາມຍິນດີໃນຂອງອັນທີ່ມີຢູ່ດ້ວຍ |
| ກະຕັນຍຸຕາ | ຄວາມເປັນຜູ້ກະຕັນຍູດ້ວຍ |
| ກາເລນະ ທັມມັສສະວະນັງ | ການໄດ້ຟັງທັມຕາມການດ້ວຍ |
| ເອຕັມມັງຄະລະມຸຕຕະມັງ | ກິຈ ໕ ຢ່າງນີ້ເປັນມຸງຄຸນອັນສູງສຸດ. |
| ຊ. ຂັນຕີ ຈະ | ຄວາມອົດທົນດ້ວຍ |
| ໂສວະຈັສສະຕາ | ຄວາມເປັນຜູ້ວ່າງ່າຍສອນງ່າຍດ້ວຍ |
| ສະມະນານັນຈະ ທັສສະນັງ | ການເຫັນສະມະນະທັງຫລາຍດ້ວຍ |
| ກາເລນະ ທັມມະສາກັຈສາ | ການສົນທະນາທັມຕາມການດ້ວຍ |
| ເອຕັມມັງຄະລະມຸຕຕະມັງ | ກິຈ ໔ ຢ່າງນີ້ເປັນມຸງຄຸນອັນສູງສຸດ. |
| ໙. ຕະໂປ ຈະ | ຄວາມພາກພຽນເຜົາກິເລສດ້ວຍ |

| | |
|---|---|
| ພຣັມມະຈະຣິຍັນ ຈະ | ຄວາມປະພຶດຢ່າງພຣົມດ້ວຍ |
| ອະຣິຍະສັຈຈານິ ທັສສະນັງ | ການເຫັນອະຣິຍະສັຈທັງຫລາຍດ້ວຍ |
| ນິພພານະສັຈສິກິຣິຍາ ຈະ | ການທຳພຣະນິພພານໃຫ້ແຈ້ງດ້ວຍ |
| ເອຕັມມັງຄະລະມຸຕຕະມັງ | ກິຈ ໔ ຢ່າງນີ້ເປັນມຸງຄຸນອັນສູງສຸດ. |
| ໑໐. ຜຸດຖັສສະ ໂລກະທັມເມຫິ | ຈິຕຂອງຜູ້ໃດອັນໂລກະທັມທັງຫລາຍຖືກຕ້ອງແລ້ວ |
| ຈິຕຕັງ ຍັສສະ ນະ ກັມປະຕິ | ຍ່ອມບໍ່ຫວັ່ນໄຫວ |
| ອະໂສກັງ ວິຣະຊັງ ເຂມັງ | ຈິຕບໍ່ເສົ້າໂສກ, ຈິຕບໍ່ມີກິເລສທຸລີ, ຈິຕກະເສມສຸກ |
| ເອຕັມມັງຄະລະມຸຕຕະມັງ | ກິຈ ໔ ຢ່າງນີ້ເປັນມຸງຄຸນອັນສູງສຸດ. |
| ເອຕາທິສານິ ກັຕຕະວານະ | ເທວະດາແລະມະນຸສທັງຫລາຍທຳຕາມມຸງຄຸນເຫລົ່ານີ້ແລ້ວ |
| ສັພພັຕຖະມະປະຣາຊິຕາ, | ຍ່ອມເປັນຜູ້ບໍ່ພ່າຍແພ້ໃນທີ່ທັງປວງ |
| ສັພພັຕຖະ ໂສຕຖິງ ຄັຈສັນຕິ, | ຍ່ອມເຖິງຄວາມສຸກສະບາຍໃນທີ່ທັງປວງ |
| ຕັນເຕສັງ ມັງຄະລະມຸຕຕະມັນຕິ | ຂໍ້ນັ້ນເປັນມຸງຄຸນອັນສູງສຸດຂອງເທວະດາແລະມະນຸສທັງຫລາຍ |
| ອິຕິ... | ດ້ວຍປະການ ສະນີ້ແລ. |

# 5.8 ທັມມະຈັກກັປປະວັຕຕະນະສູຕຮ໌

(ຫັນທະ ມະຍັງ ທັມມະຈັກກັປປະວັຕຕະນະສຸຕຕະປາຖັງ ພະນາມະ ເສ)

| | |
|---|---|
| **ທະເວເມ ພິກຂະເວ ອັນຕາ** | ດູກ່ອນພິກຂຸທັງຫລາຍ ທີ່ສຸດແຫ່ງການກະທຳ ໔ ຢ່າງເຫລົ່ານີ້ ມີຢູ່ |
| **ປັພພະຊິເຕນະ ນະ ເສວິຕັພພາ** | ເປັນສິ່ງທີ່ບັນພະຊິຕບໍ່ຄວນຂ້ອງແວະເລີຍ |
| **ໂຍ ຈາຍັງ ກາເມສຸ ກາມະສຸຂັລລິການຸໂຍໂຄ** | ນີ້ຄື ການປະກອບຕົນພົວພັນຢູ່ດ້ວຍຄວາມໄຄ່ໃນກາມທັງຫລາຍ |
| **ຫີໂນ** | ເປັນ ຂອງຕ່ຳຊາມ |
| **ຄັມໂມ** | ເປັນ ຂອງຊາວບ້ານ |
| **ໂປຖຸຊຊະນິໂກ** | ເປັນ ຂອງຊົນຊັ້ນປຸຊຊົນ |
| **ອະນະຣິໂຍ** | ບໍ່ແມ່ນ ຂໍ້ປະຕິບັຕຂອງພຣະອະຣິຍະເຈົ້າ |
| **ອະນັຕຖະສັນຫິໂຕ** | ບໍ່ປະກອບດ້ວຍປໂຍດເລີຍ, ນີ້ຢ່າງນຶ່ງ |
| **ໂຍ ຈາຍັງ ອັຕຕະກິລະມະຖານຸໂຍໂຄ** | ອີກຢ່າງນຶ່ງ ຄືການປະກອບການທໍຣະມານຕົນໃຫ້ລຳບາກ |
| **ທຸກໂຂ** | ເປັນສິ່ງນຳມາຊຶ່ງທຸກ |
| **ອະນະຣິໂຍ** | ບໍ່ແມ່ນຂໍ້ປະຕິບັຕຂອງພຣະອະຣິຍະເຈົ້າ |
| **ອະນັຕຖະສັນຫິໂຕ** | ບໍ່ປະກອບດ້ວຍປໂຍດເລີຍ |
| **ເອເຕ ເຕ ພິກຂະເວ ອຸໂພ ອັນເຕ ອະນຸປະຄັມມະ ມັຊຊິມາ ປະຕິປະທາ** | ດູກ່ອນພິກຂຸທັງຫລາຍ ຂໍ້ປະຕິບັຕ ເປັນທາງສາຍກາງບໍ່ເຂົ້າໄປຫາທີ່ສຸດແຫ່ງການກະທຳ ໔ ຢ່າງນັ້ນ ມີຢູ່ |
| **ຕະຖາຄະເຕນະ ອະພິສັມພຸທທາ** | ເປັນຂໍ້ປະຕິບັຕທີ່ຕະຖາຄົຕ ໄດ້ຕຣັສຮູ້ພ້ອມສະເພາະແລ້ວ |

| | |
|---|---|
| **ຈັກຂຸກະຣະນີ** | ເປັນເຄື່ອງກະທຳໃຫ້ ເກີດຈັກຂຸ |
| **ຍານະກະຣະນີ** | ເປັນເຄື່ອງກະທຳໃຫ້ ເກີດຍານ |
| **ອຸປະສະມາຍະ** | ເພື່ອຄວາມສງົບ |
| **ອະພິນຍາຍະ** | ເພື່ອຄວາມຮູ້ຍິ່ງ |
| **ສັມໂພທາຍະ** | ເພື່ອຄວາມຮູ້ພ້ອມ |
| **ນິພພານາຍະ ສັງວັຕຕະຕິ** | ເປັນໄປພ້ອມເພື່ອນິພພານ |
| **ກະຕະມາ ຈະ ສາ ພິກຂະເວ ມັຊຊິມາ ປະຕິປະທາ** | ດູກ່ອນພິກຂຸທັງຫລາຍ ຂໍ້ປະຕິບັດເປັນທາງສາຍກາງນັ້ນເປັນຢ່າງໃດເລົ່າ |
| **ອະຍະເມວະ ອະຣິໂຍ ອັຕຖັງຄິໂກ ມັຄໂຄ** | ຂໍ້ປະຕິບັດເປັນທາງສາຍກາງນັ້ນຄືຂໍ້ປະຕິບັດເປັນຫົນທາງອັນປະເສີດ, ປະກອບດ້ວຍອົງ ๘ ປະການ ນີ້ເອງ |
| **ເສຍຍະຖີທັງ** | ໄດ້ແກ່ສິ່ງເຫລົ່ານີ້ ຄື |
| **ສັມມາທິຕຖິ** | ຄວາມເຫັນຊອບ |
| **ສັມມາສັງກັປໂປ** | ຄວາມດຳຣິຊອບ |
| **ສັມມາວາຈາ** | ການເວົ້າຈາຊອບ |
| **ສັມມາກັມມັນໂຕ** | ການທຳການງານຊອບ |
| **ສັມມາອາຊີໂວ** | ການລ້ຽງຊີວິຕຊອບ |
| **ສັມມາວາຍາໂມ** | ຄວາມພາກພຽນຊອບ |
| **ສັມມາສະຕິ** | ຄວາມຣະນຶກຊອບ |

**ສັມມາສະມາທິ** ຄວາມຕັ້ງໃຈມັ່ນຊອບ

**ອະຍັງ ໂຂ ສາ ພິກຂະເວ ມັຊຊິມາ ປະຕິປະທາ** ດູກ່ອນພິກຂຸທັງຫລາຍ ນີ້ແລ ຄືຂໍ້ປະຕິບັດເປັນທາງສາຍກາງ

**ຕະຖາຄະເຕນະ ອະພິສັມພຸທທາ** ເປັນຂໍ້ປະຕິບັດທີ່ຕະຖາຄົດໄດ້ຕຣັສຮູ້ພ້ອມສະເພາະແລ້ວ

**ຈັກຂຸກະຣະນີ** ເປັນເຄື່ອງກະທຳໃຫ້ ເກີດຈັກຂຸ

**ຍານະກະຣະນີ** ເປັນເຄື່ອງກະທຳໃຫ້ ເກີດຍານ

**ອຸປະສະມາຍະ** ເພື່ອຄວາມສງົບ

**ອະພິນຍາຍະ** ເພື່ອຄວາມຮູ້ຍິ່ງ

**ສັມໂພທາຍະ** ເພື່ອຄວາມຮູ້ພ້ອມ

**ນິພພານາຍະ ສັງວັຕຕະຕິ** ເປັນໄປພ້ອມເພື່ອນິພພານ

**ອິທັງ ໂຂ ປະນະ ພິກຂະເວ ທຸກຂັງ ອະຣິຍະສັຈຈັງ** ດູກ່ອນພິກຂຸທັງຫລາຍ ກໍອະຣິຍະສັຈ ຄື ທຸກນີ້ ມີຢູ່

**ຊາຕິປິ ທຸກຂາ** ຄື ຄວາມເກີດ ກໍເປັນທຸກ

**ຊະຣາປິ ທຸກຂາ** ຄວາມແກ່ ກໍເປັນທຸກ

**ມະຣະນັມປິ ທຸກຂັງ** ຄວາມຕາຍ ກໍເປັນທຸກ

**ໂສກະປະຣິເທວະທຸກຂະໂທມະນັສສຸປາຍາສາປິ ທຸກຂາ** ຄວາມໂສກ ຄວາມຮ່ຳໄຮຣຳພັນ ຄວາມບໍ່ສະບາຍກາຍ ຄວາມບໍ່ສະບາຍໃຈ ຄວາມຄັບແຄ້ນໃຈ ກໍເປັນທຸກ

**ອັປປິເຍຫິ ສັມປະໂຍໂຄ ທຸກໂຂ** ຄວາມປະສົບກັບສິ່ງບໍ່ເປັນທີ່ຮັກທີ່ພໍໃຈ ກໍເປັນທຸກ

**ປິເຍຫິ ວິປປະໂຍໂຄ ທຸກໂຂ** ຄວາມພັດພາກຈາກສິ່ງເປັນທີ່ຮັກທີ່ພໍໃຈ ກໍເປັນທຸກ

**ຍັມປິຈຊັງ ນະ ລະພະຕິ ຕັມປິ ທຸກຂັງ** ມີຄວາມປາຖນາສິ່ງໃດບໍ່ໄດ້ສິ່ງນັ້ນ ນັ້ນກໍເປັນທຸກ

**ສັງຂິດເຕນະ ປັນຈຸປາທານັກຂັນທາ ທຸກຂາ** ວ່າໂດຍຫຍໍ້ອຸປາທານຂັນທັງ ໕ ເປັນຕົວທຸກ

**ອິທັງ ໂຂ ປະນະ ພິກຂະເວ ທຸກຂະສະມຸທະໂຍ ອະຣິຍະສັຈຈັງ** ດູກ່ອນພິກຂຸທັງຫລາຍ, ກໍອະຣິຍະສັຈຄືເຫດໃຫ້ເກີດທຸກນີ້ມີຢູ່

**ຍາຍັງ ຕັນຫາ** ນີ້ຄື ຕັນຫາ

**ໂປໂນພພະວິກາ** ອັນເປັນເຄື່ອງທຳໃຫ້ມີການເກີດອີກ

**ນັນທິຣາຄະສະຫະຄະຕາ** ອັນປະກອບຢູ່ດ້ວຍຄວາມກຳຫນັດດ້ວຍອຳນາດຄວາມເພີນ

**ຕັດຕະຣະ ຕັດຕະຣາພິນັນທິນີ** ອັນເປັນເຄື່ອງທຳໃຫ້ເພີນຢ່າງຍິ່ງໃນອາຣົມນັ້ນ ໆ

**ເສຍຍະຖີທັງ** ໄດ້ແກ່ ຕັນຫາເຫລົ່ານີ້ ຄື

**ກາມະຕັນຫາ** ຕັນຫາໃນກາມ (ຄວາມຢາກໄດ້ໃນກາມມະຄຸນ໕)

**ພະວະຕັນຫາ** ຕັນຫາໃນຄວາມມີຄວາມເປັນ (ຄວາມຢາກມີ ຢາກເປັນ)

**ວິພະວະຕັນຫາ** ຕັນຫາໃນຄວາມບໍ່ມີບໍ່ເປັນ (ຄວາມບໍ່ຢາກມີ ບໍ່ຢາກເປັນ)

**ອິທັງ ໂຂ ປະນະ ພິກຂະເວ ທຸກຂະນິໂຣໂທ ອະຣິຍະສັຈຈັງ** ດູກ່ອນພິກຂຸທັງຫລາຍ, ກໍອະຣິຍະສັຈຄືຄວາມດັບບໍ່ເຫລືອເຫງົ່າທຸກນີ້ມີຢູ່

**ໂຍ ຕັສສາເຍວະ ຕັນຫາຍະ ອະເສສະວິຣາຄະນິໂຣໂທ** ນີ້ຄືຄວາມດັບສນິດເພາະຈາງໄປໂດຍບໍ່ມີເຫລືອຂອງຕັນຫານັ້ນໆເອງ

**ຈາໂຄ** ເປັນຄວາມສະລັດຖິ້ມ

**ປະຕິນິສສັຄໂຄ** ເປັນຄວາມສະລັດຄືນ

**ມຸຕຕິ** ເປັນຄວາມປ່ອຍ

**ອະນາລະໂຍ** ເປັນຄວາມທຳບໍ່ໃຫ້ມີທີ່ອາສັຍ ຊຶ່ງຕັນຫານັ້ນ

**ອິທັງ ໂຂ ປະນະ ພິກຂະເວ ທຸກຂະນິໂຣທະຄາມິນີ ປະຕິປະທາ ອະຣິຍະສັຈຈັງ**ດູກ່ອນພິກຂຸທັງຫລາຍ, ກໍອະຣິຍະສັຈ ຄືຂໍ້ ປະຕິບັດທີ່ທຳສັດໃຫ້ລຸເຖິງຄວາມດັບບໍ່ເຫລືອແຫ່ງທຸກນີ້ ມີຢູ່

**ອະຍະເມວະ ອະຣິໂຍ ອັຕຖັງຄິໂກ ມັຄໂຄ** ນີ້ຄືຂໍ້ປະຕິບັດເປັນຫົນທາງອັນປະເສີດ ປະກອບດ້ວຍອົງ ໘ ປະການ

**ເສຍຍະຖີທັງ** ໄດ້ແກ່ສິ່ງເຫລົ່ານີ້ ຄື

**ສັມມາທິຕຖິ** ຄວາມເຫັນຊອບ

**ສັມມາສັງກັປໂປ** ຄວາມດຳຣິຊອບ

**ສັມມາວາຈາ** ການເວົ້າຈາຊອບ

**ສັມມາກັມມັນໂຕ** ການທຳການງານຊອບ

**ສັມມາອາຊີໂວ** ການລ້ຽງຊີວິຕຊອບ

**ສັມມາວາຍາໂມ** ຄວາມພາກພຽນຊອບ

**ສັມມາສະຕິ** ຄວາມຣະນຶກຊອບ

**ສັມມາສະມາທິ** ຄວາມຕັ້ງໃຈໝັ້ນຊອບ

**ອິທັງ ທຸກຂັງ ອະຣິຍະສັຈຈັນຕິ ເມ ພິກຂະເວ, ປຸພເພ ອະນະນຸສສຸເຕສຸ ທັມເມສຸ, ຈັກຂຸງ ອຸທະປາທິ, ຍານັງ ອຸທະປາທິ, ປັນຍາ ອຸທະປະທິ, ວິຊຊາ ອຸທະປາທິ, ອາໂລໂກ ອຸທະປາທິ** ດູກ່ອນພິກຂຸທັງຫລາຍ, ຈັກຂຸເກີດຂຶ້ນແລ້ວແກ່ເຮົາ, ຍານເກີດຂຶ້ນ ແລ້ວແກ່ເຮົາ, ປັນຍາເກີດຂຶ້ນແລ້ວແກ່ເຮົາ, ວິຊຊາເກີດຂຶ້ນແລ້ວແກ່ເຮົາ, ແສງສວ່າງ ເກີດຂຶ້ນແລ້ວແກ່ເຮົາ, ໃນທັມທີ່ເຮົາບໍ່ເຄີຍຟັງມາແຕ່ກ່ອນ, ວ່າອະຣິຍະສັຈຄືທຸກເປັນຢ່າງນີ້ ຢ່າງນີ້ ດັ່ງນີ້

**ຕັງ ໂຂ ປະນິທັງ ທຸກຂັງ ອະຣິຍະສັຈຈັງ ປຣິນເຍຍຍັນຕິ** ວ່າ ກໍອະຣິຍະສັຈຄືທຸກນັ້ນແລ ເປັນສິ່ງທີ່ຄວນກຳນົດຮູ້ ດັ່ງນີ້

**ຕັງ ໂຂ ປະນິທັງ ທຸກຂັງ ອະຣິຍະສັຈຈັງ ປຣິນຍາຕັນຕິ** ວ່າ ກໍອະຣິຍະສັຈຄືທຸກນັ້ນແລ ເຮົາກຳນົດຮູ້ໄດ້ແລ້ວ ດັ່ງນີ້

**ອິທັງ ທຸກຂະສະມຸທະໂຍ ອະຣິຍະສັຈຈັນຕິ ເມ ພິກຂະເວ, ປຸພເພ ອະນະນຸສສຸເຕສຸ ທັມເມສຸ, ຈັກຂຸງ ອຸທະປາທິ, ຍານັງ ອຸທະປາທິ, ປັນຍາ ອຸທະປາທິ, ວິຊຊາ ອຸທະປາທິ, ອາໂລໂກ ອຸທະປາທິ**

ດູກ່ອນພິກຂຸທັງຫລາຍ, ຈັກຂຸເກີດຂຶ້ນແລ້ວແກ່ເຮົາ, ຍານເກີດຂຶ້ນແລ້ວແກ່ເຮົາ, ປັນຍາເກີດຂຶ້ນແລ້ວແກ່ເຮົາ, ວິຊຊາເກີດຂຶ້ນແລ້ວແກ່ເຮົາ, ແສງສວ່າງເກີດຂຶ້ນແລ້ວແກ່ເຮົາ, ໃນທັມທີ່ເຮົາບໍ່ເຄີຍຟັງມາແຕ່ກ່ອນ, ວ່າອະຣິຍະສັຈຄືເຫຕໃຫ້ເກີດທຸກເປັນຢ່າງນີ້ ຢ່າງນີ້ ດັ່ງນີ້

**ຕັງ ໂຂ ປະນິທັງ ທຸກຂະສະມຸທະໂຍ ອະຣິຍະສັຈຈັງ ປະຫາຕັພພັນຕິ**

ວ່າ ກໍອະຣິຍະສັຈຄືເຫຕໃຫ້ເກີດທຸກນັ້ນແລ ເປັນສິ່ງທີ່ຄວນລະເສັຽ ດັ່ງນີ້

**ຕັງ ໂຂ ປະນິທັງ ທຸກຂະສະມຸທະໂຍ ອະຣິຍະສັຈຈັງ ປະຫີນັນຕິ**

ວ່າກໍອະຣິຍະສັຈຄືເຫຕໃຫ້ເກີດທຸກນັ້ນແລ ເຮົາລະໄດ້ແລ້ວດັ່ງນີ້

**ອິທັງ ທຸກຂະນິໂຣໂທ ອະຣິຍະສັຈຈັນຕິ ເມ ພິກຂະເວ, ປຸພເພ ອະນະນຸສສຸ ເຕສຸ ທັມເມສຸ, ຈັກຂຸງ ອຸທະປາທິ, ຍານັງ ອຸທະປາທິ, ປັນຍາ ອຸທະປາທິ, ວິຊຊາ ອຸທະປາທິ, ອາໂລໂກ ອຸທະປາທິ**

ດູກ່ອນພິກຂຸທັງຫລາຍ, ຈັກຂຸເກີດຂຶ້ນແລ້ວແກ່ເຮົາ, ຍານເກີດ ຂຶ້ນແລ້ວແກ່ເຮົາ, ປັນຍາເກີດຂຶ້ນແລ້ວແກ່ເຮົາ, ວິຊຊາເກີດຂຶ້ນແລ້ວແກ່ເຮົາ, ແສງສວ່າງເກີດຂຶ້ນແລ້ວແກ່ເຮົາ, ໃນທັມທີ່ເຮົາບໍ່ເຄີຍຟັງມາແຕ່ກ່ອນ, ວ່າອະຣິຍະສັຈຄືຄວາມດັບບໍ່ເຫລືອແຫ່ງທຸກເປັນຢ່າງນີ້ ຢ່າງນີ້ ດັ່ງນີ້

**ຕັງ ໂຂ ປະນິທັງ ທຸກຂະນິໂຣໂທ ອະຣິຍະສັຈຈັງ ສັຈສິກາຕັພພັນຕິ**

ວ່າ ກໍອະຣິຍະສັຈ ຄື ຄວາມດັບບໍ່ເຫລືອແຫ່ງທຸກນັ້ນແລເປັນສິ່ງທີ່ຄວນທຳໃຫ້ແຈ້ງ ດັ່ງນີ້

**ຕັງໂຂ ປະນິທັງ ທຸກຂະນິໂຣໂທ ອະຣິຍະສັຈຈັງ ສັຈສິກະຕັນຕິ**

ວ່າ ກໍອະຣິຍະສັຈ ຄື ຄວາມດັບບໍ່ເຫລືອ ແຫ່ງທຸກ ນັ້ນແລ ເຮົາທຳໃຫ້ແຈ້ງໄດ້ແລ້ວ ດັ່ງນີ້

**ອິທັງ ທຸກຂະນິໂຣທະຄາມິນີປະຕິປະທາ ອະຣິຍະສັຈຈັນຕິ ເມ ພິກຂະເວ, ປຸພເພ ອະນະນຸສສຸເຕສຸ ທັມເມສຸ, ຈັກຂຸງ ອຸທະປາທິ, ຍານັງ ອຸທະປາທິ, ປັນຍາ ອຸທະປາທິ, ວິຊຊາ ອຸທະປາທິ, ອາໂລໂກ ອຸທະປາທິ**

ດູກ່ອນພິກຂຸທັງຫລາຍ, ຈັກຂຸເກີດຂຶ້ນ ແລ້ວແກ່ເຮົາ, ຍານເກີດຂຶ້ນແລ້ວແກ່ເຮົາ, ປັນຍາເກີດຂຶ້ນແລ້ວແກ່ເຮົາ, ວິຊຊາເກີດຂຶ້ນແລ້ວແກ່ເຮົາ, ແສງສວ່າງເກີດຂຶ້ນແລ້ວແກ່ເຮົາ, ໃນທັມທີ່ເຮົາບໍ່ເຄີຍຟັງມາແຕ່ກ່ອນ, ວ່າອະຣິຍະສັຈຄື ຂໍ້ປະຕິບັດທີ່ທຳສັດໃຫ້ລຸເຖິງຄວາມດັບບໍ່ເຫລືອແຫ່ງທຸກເປັນຢ່າງນີ້ ນີ້ຢ່າງ ດັ່ງນີ້

**ຕັງ ໂຂ ປະນິທັງ ທຸກຂະນິໂຣທະຄາມິນີປະຕິປະທາ ອະຣິຍະສັຈຈັງ ພາເວຕັພພັນຕິ** ວ່າ ກໍອະຣິຍະສັຈ ຄື ຂໍ້ປະຕິບັດ ທີ່ທຳ ສັດໃຫ້ບັນລຸເຖິງຄວາມດັບບໍ່ເຫລືອແຫ່ງທຸກນັ້ນແລ ເປັນສິ່ງທີ່ຄວນທຳໃຫ້ເກີດມີ ດັ່ງນີ້

**ຕັງ ໂຂ ປະນິທັງ ທຸກຂະນິໂຣທະຄາມິນີປະຕິປະທາ ອະຣິຍະສັຈຈັງ ພາວິຕັນຕິ** ວ່າ ກໍອະຣິຍະສັຈ ຄື ຂໍ້ປະຕິບັດທີ່ທຳສັດໃຫ້ບັນລຸເຖິງຄວາມດັບບໍ່ເຫລືອແຫ່ງທຸກນັ້ນແລ ເຮົາທຳໃຫ້ເກີດມີໄດ້ແລ້ວ ດັ່ງນີ້

**ຍາວະກີວັນຈະ ເມ ພິກຂະເວ, ອິເມສຸ ຈະຕູສຸ ອະຣິຍະສັຈເຈສຸ, ເອວັນຕິປະຣິວັຕຕັງ ທະວະທະສາກາຣັງ, ຍະຖາພູຕັງ ຍານະທັສສະນັງ ນະ ສຸວິສຸທທັງ ອະໂຫສິ**

ດູກ່ອນພິກຂຸທັງຫລາຍ,ປັນຍາເຄື່ອງຮູ້ເຫັນຕາມທີ່ເປັນຈິງ, ມີປະຣິວັດ ໓ ມີອາການ ໑໒ ເຊັ່ນນັ້ນ, ໃນອະຣິຍະສັຈທັງ ໔ ເຫລົ່ານີ້, ຍັງບໍ່ເປັນຂອງບໍຣິສຸດໝົດຈົດດ້ວຍດີແກ່ເຮົາ, ຢູ່ພຽງໃດ

**ເນວະ ຕາວາຫັງ ພິກຂະເວ ສະເທວະເກ ໂລເກ ສະມາຣະເກ ສະພຣັມມະເກ, ສັສສະມະນະພຣາມມະນິຍາ ປະຊາຍະ ສະເທວະມະ ນຸສສາຍະ, ອະນຸຕຕະຣັງ ສັມມາສັມໂພທິງ ອະພິສັມພຸທໂທ ປັຈຈັນຍາສິງ**

ດູກ່ອນພິກຂຸທັງຫລາຍ, ຕລອດກາລພຽງນັ້ນ, ເຮົາຍັງບໍ່ປະຕິຍານວ່າ ໄດ້ຕຣັສຮູ້ພ້ອມສະເພາະແລ້ວ, ຊຶ່ງອະນຸຕຕະຣະສັມມາສັມໂພທິຍານ, ໃນໂລກພ້ອມທັງເທວະໂລກ, ມາຣະໂລກ, ພຣົມມະໂລກ, ໃນໝູ່ສັດ ພ້ອມທັງສະມະນະພຣາມ, ພ້ອມທັງເທວະດາ ແລະມະນຸສ

**ຍະໂຕ ຈະ ໂຂ ເມ ພິກຂະເວ, ອິເມສຸ ຈະຕູສຸ ອະຣິຍະສັຈເຈສຸ, ເອວັນຕິປະຣິວັຕຕັງ ທະວະທະສາກາຣັງ, ຍະຖາພູຕັງ ຍານະທັສສະນັງ ສຸວິສຸທທັງ ອະໂຫສິ**

ດູກ່ອນພິກຂຸທັງຫລາຍ, ເມື່ອໃດ ປັນຍາເຄື່ອງຮູ້ເຫັນຕາມທີ່ເປັນຈິງ, ມີປະຣິວັຕ ໓ ມີອາການ ໑໔ ເຊັ່ນນັ້ນ, ໃນອະຣິຍະສັຈທັງ ໔ ເຫລົ່ານີ້ ເປັນຂອງບໍຣິສຸດໝົດຈົດດ້ວຍດີແກ່ເຮົາ

**ອະຖາຫັງ ພິກຂະເວ ສະເທວະເກ ໂລເກ ສະມາຣະເກ ສະພຣົມມະເກ, ສັສສະມະນະພຣາມມະນິຍາ ປະຊາຍະ ສະເທວະມະນຸສສາຍະ, ອະນຸຕຕະຣັງ ສັມມາສັມໂພທິງ ອະພິສັມພຸທໂທ ປັຈຈັນຍາສິງ**

ດູກ່ອນພິກຂຸທັງຫລາຍ, ເມື່ອນັ້ນ ເຮົາຈຶ່ງປະຕິຍານວ່າ ໄດ້ຕຣັສຮູ້ພ້ອມສະເພາະແລ້ວ, ຊຶ່ງອະນຸຕຕະຣະສັມມາສັມໂພທິຍານ, ໃນໂລກພ້ອມທັງເທວະໂລກ, ມາຣະໂລກ, ພຣົມມະໂລກ, ໃນໝູ່ສັຕພ້ອມທັງສະມະນະພຣາມ, ພ້ອມທັງເທວະດາ ແລະມະນຸສ

**ຍານັນຈະ ປະນະ ເມ ທັສສະນັງ ອຸທະປາທິ** ດູກ່ອນພິກຂຸທັງຫລາຍ, ກໍຍານແລະທັສນະໄດ້ເກີດຂຶ້ນແລ້ວແກ່ເຮົາ

**ອະກຸປປາ ເມ ວິມຸຕຕິ** ວ່າຄວາມຫລຸດພົ້ນຂອງເຮົາບໍ່ກັບມາກຳເລີບ

**ອະຍະມັນຕິມາ ຊາຕິ** ຄວາມເກີດນີ້ເປັນຄວາມເກີດຄັ້ງສຸດທ້າຍ

**ນັຕຖິທານິ ປຸນັພພະໂວ ຕິ.** ບັດນີ້ ຄວາມເກີດອີກຍ່ອມບໍ່ມີ ດັ່ງນີ້.



# 5.9 ອະຣິຍະມັຄມີອົງຄ໌ 8 (ແປ)

(ຫັນທະ ມະຍັງ ອະຣິຍັຕຖັງຄິກະມັຄຄະປາຖັງ ພະນາມະ ເສ)

**ອະຍະເມວະ ອະຣິໂຍ ອັຕຖັງຄິໂກ ມັຄໂຄ** ຫົນທາງນີ້ແລ, ເປັນຫົນທາງອັນປະເສີດ, ຊຶ່ງປະກອບດ້ວຍອົງ ๘

**ເສຍຍະຖີທັງ** ໄດ້ແກ່ສິ່ງເຫລົ່ານີ້ ຄື:

**ສັມມາທິຕຖິ** ຄວາມເຫັນຊອບ

**ສັມມາສັງກັປໂປ** ຄວາມດຳຣິຊອບ

**ສັມມາວາຈາ** ການເວົ້າຈາຊອບ

**ສັມມາກັມມັນໂຕ** ການທຳການງານຊອບ

**ສັມມາອາຊີໂວ** ການລ້ຽງຊີວິດຊອບ

**ສັມມາວາຍາໂມ** ຄວາມພາກພຽນຊອບ

**ສັມມາສະຕິ** ຄວາມຣະນຶກຊອບ

**ສັມມາສະມາທິ** ຄວາມຕັ້ງໃຈມັ່ນຊອບ

**(ອົງມັຄທີ ໑)**

**ກະຕະມາ ຈະ ພິກຂະເວ ສັມມາທິຕຖິ** ດູກ່ອນພິກຂຸທັງຫລາຍ, ຄວາມເຫັນຊອບເປັນຢ່າງໃດເລົ່າ?

**ຍັງ ໂຂ ພິກຂະເວ ທຸກເຂ ຍານັງ** ດູກ່ອນພິກຂຸທັງຫລາຍ, ຄວາມຮູ້ອັນໃດເປັນຄວາມຮູ້ໃນທຸກ

**ທຸກຂະສະມຸທະເຍ ຍານັງ** ເປັນຄວາມຮູ້ໃນເຫຕໃຫ້ເກີດທຸກ

**ທຸກຂະນິໂຣເທ ຍານັງ** ເປັນຄວາມຮູ້ໃນຄວາມດັບແຫ່ງທຸກ

| | |
|---|---|
| **ທຸກຂະນິໂຣທະຄາມິນີຍາ ປະຕິປະທາຍະ ຍານັງ** | ເປັນຄວາມຮູ້ໃນທາງດຳເນີນໃຫ້ເຖິງຄວາມດັບແຫ່ງທຸກ |
| **ອະຍັງ ວຸຈຈະຕິ ພິກຂະເວ ສັມມາທິຕຖິ** | ດູກ່ອນພິກຂຸທັງຫລາຍ, ອັນນີ້ເຮົາກ່າວວ່າ **ຄວາມເຫັນຊອບ** **(ອົງມັຄທີ ໑)** |
| **ກະຕະໂມ ຈະ ພິກຂະເວ ສັມມາສັງກັປໂປ** | ດູກ່ອນພິກຂຸທັງຫລາຍ, ຄວາມດຳຣິຊອບເປັນຢ່າງໃດເລົ່າ? |
| **ເນກຂັມມະສັງກັປໂປ** | ຄວາມດຳຣິໃນການອອກຈາກກາມ |
| **ອະພະຍາປາທະສັງກັປໂປ** | ຄວາມດຳຣິໃນການບໍ່ມຸ່ງຮ້າຍ |
| **ອະວິຫິງສາສັງກັປໂປ** | ຄວາມດຳຣິໃນການບໍ່ບຽດບຽນ |
| **ອະຍັງ ວຸຈຈະຕິ ພິກຂະເວ ສັມມາສັງກັປໂປ** | ດູກ່ອນພິກຂຸທັງຫລາຍ, ອັນນີ້ເຮົາກ່າວວ່າ **ຄວາມດຳຣິຊອບ** **(ອົງມັຄທີ ໒)** |
| **ກະຕະມາ ຈະ ພິກຂະເວ ສັມມາວາຈາ** | ດູກ່ອນພິກຂຸທັງຫລາຍ, ການເວົ້າຈາຊອບເປັນຢ່າງໃດເລົ່າ? |
| **ມຸສາວາທາ ເວຣະມະນີ** | ເຈຕະນາເປັນເຄື່ອງເວັ້ນຈາກການເວົ້າບໍ່ຈິງ |
| **ປິສຸນາຍະ ວາຈາຍະ ເວຣະມະນີ** | ເຈຕະນາເປັນເຄື່ອງເວັ້ນຈາກການເວົ້າສໍ່ສຽດ |
| **ຜະຣຸສາຍະ ວາຈາຍະ ເວຣະມະນີ** | ເຈຕະນາເປັນເຄື່ອງເວັ້ນຈາກການເວົ້າຄຳຫຍາບ |
| **ສັມຜັປປະລາປາ ເວຣະມະນີ** | ເຈຕະນາເປັນເຄື່ອງເວັ້ນຈາກການເວົ້າເພີ້ເຈື້ |
| **ອະຍັງ ວຸຈຈະຕິ ພິກຂະເວ ສັມມາວາຈາ** | ດູກ່ອນພິກຂຸທັງຫລາຍ, ອັນນີ້ເຮົາກ່າວວ່າ **ການເວົ້າຈາຊອບ** **(ອົງມັຄທີ ໓)** |
| **ກະຕະໂມ ຈະ ພິກຂະເວ ສັມມາກັມມັນໂຕ** | ດູກ່ອນພິກຂຸທັງຫລາຍ, ການທຳການງານຊອບເປັນຢ່າງໃດເລົ່າ? |
| **ປານາຕິປາຕາ ເວຣະມະນີ** | ເຈຕະນາເປັນເຄື່ອງເວັ້ນຈາກການຂ້າ |

**ອະທິນາທານາ ເວຣະມານີ** ເຈຕະນາເປັນເຄື່ອງເວັ້ນຈາກການຖືເອົາສິ່ງຂອງທີ່ເຈົ້າຂອງບໍ່ໄດ້ໃຫ້ແລ້ວ
**ກາເມສຸ ມິຈສາຈາຣະ ເວຣະມານີ** ເຈຕະນາເປັນເຄື່ອງເວັ້ນຈາກການປະພຶດຜິດໃນກາມທັງຫລາຍ
**ອະຍັງ ວຸຈຈະຕິ ພິກຂະເວ ສັມມາກັມມັນໂຕ** ດູກ່ອນພິກຂຸທັງຫລາຍ, ອັນນີ້ເຮົາກ່າວວ່າ **ການທຳການງານຊອບ**

(ອົງທີ່ ໕)

**ກະຕະໂມ ຈະ ພິກຂະເວ ສັມມາອາຊີໂວ** ດູກ່ອນພິກຂຸທັງຫລາຍ, ການລ້ຽງຊີວິດຊອບເປັນຢ່າງໃດເລົ່າ?
**ອິທະ ພິກຂະເວ ອະຣິຍະສາວະໂກ** ດູກ່ອນພິກຂຸທັງຫລາຍ, ສາວົກຂອງພຣະອະຣິຍະເຈົ້າໃນທັມວິນັຍນີ້
**ມິຈສາອາຊີວັງ ປະຫາຍະ** ລະການລ້ຽງຊີວິດທີ່ຜິດເສັຽ
**ສັມມາອາຊີເວນະ ຊີວິກັງ ກັປເປຕິ** ຍ່ອມສຳເຣັດຄວາມເປັນຢູ່ດ້ວຍການລ້ຽງຊີວິດທີ່ຊອບ
**ອະຍັງ ວຸຈຈະຕິ ພິກຂະເວ ສັມມາອາຊີໂວ** ດູກ່ອນພິກຂຸທັງຫລາຍ, ອັນນີ້ເຮົາກ່າວວ່າ **ການລ້ຽງຊີວິດຊອບ**

(ອົງທີ່ ໖)

**ກະຕະໂມ ຈະ ພິກຂະເວ ສັມມາວາຍາໂມ** ດູກ່ອນພິກຂຸທັງຫລາຍ, ຄວາມພາກພຽນຊອບເປັນຢ່າງໃດເລົ່າ?
**ອິທະ ພິກຂະເວ ພິກຂຸ** ດູກ່ອນພິກຂຸທັງຫລາຍ, ພິກຂຸໃນທັມວິນັຍນີ້
**ອະນຸປປັນນານັງ ປາປະການັງ ອະກຸສະລານັງ ທັມມານັງ ອະນຸປປາທາຍະ, ສັນທັງ ຊະເນຕິ, ວາຍະມາຕິ, ວິຣິຍັງ ອາຣະພະຕິ, ຈິຕຕັງ ປັຄຄັນຫາຕິ ປະທະຫະຕິ** ຍ່ອມທຳຄວາມພໍໃຈໃຫ້ເກີດຂຶ້ນ, ຍ່ອມພະຍາຍາມປາຣົບຄວາມພຽນ, ປະຄອງຕັ້ງຈິດໄວ້, ເພື່ອຈະຍັງອະກຸສົລລະທັມອັນເປັນບາບທີ່ຍັງບໍ່ເກີດ ບໍ່ໃຫ້ເກີດຂຶ້ນ
**ອຸປປັນນານັງ ປາປະການັງ ອະກຸສະລານັງ ທັມມານັງ ປະຫາຍະ, ສັນທັງ ຊະເນຕິ, ວາຍະມະຕິ, ວິຣິຍັງ ອາຣະພະຕິ, ຈິຕຕັງ ປັຄຄັນຫາຕິ ປະທະຫະຕິ** ຍ່ອມທຳຄວາມພໍໃຈໃຫ້ເກີດຂຶ້ນ, ຍ່ອມພຍາຍາມປາຣົບຄວາມພຽນ, ປະຄອງຕັ້ງຈິດໄວ້, ເພື່ອຈະລະອະກຸສົລລະທັມອັນເປັນບາບທີ່ເກີດຂຶ້ນແລ້ວ

**ອະນຸປປັນນານັງ ກຸສະລານັງ ທັມມານັງ ອຸປປາທາຍະ, ສັນທັງ ຊະເນຕິ, ວາຍະມະຕິ ວິຣິຍັງ ອາຣະພະຕິ, ຈິຕຕັງ ປັຄຄັນຫາຕິ ປະທະຫະຕິ** ຍ່ອມທຳຄວາມພໍໃຈໃຫ້ເກີດຂຶ້ນ, ຍ່ອມພຍາຍາມປະຣົບ ຄວາມພຽນ, ປະຄອງຕັ້ງຈິຕໄວ້, ເພື່ອຈະຍັງກຸສົລລະທັມທີ່ຍັງບໍ່ເກີດໃຫ້ເກີດຂຶ້ນ

**ອຸປປັນນານັງ ກຸສະລານັງ ທັມມານັງ ຖິຕິຍາ, ອະສັມໂມສາຍະ ພິຍໂຍພາວາຍະ, ເວປຸລລາຍະ, ພາວະນາຍະ, ປາຣິປູຣິຍາ, ສັນທັງ ຊະເນຕິ, ວາຍະມະຕິ ວິຣິຍັງ ອາຣະພະຕິ, ຈິຕຕັງ ປັຄຄັນຫາຕິ ປະທະຫະຕິ**

ຍ່ອມທຳຄວາມພໍໃຈໃຫ້ເກີດຂຶ້ນ, ຍ່ອມພຍາຍາມປາຣົບຄວາມພຽນ, ປະຄອງຕັ້ງຈິຕໄວ້, ເພື່ອຄວາມຕັ້ງຢູ່, ຄວາມບໍ່ເລີະເລືອນ, ຄວາມງອກງາມຍິ່ງຂຶ້ນ, ຄວາມໄພບູນ, ຄວາມຈະເຣີນ, ຄວາມເຕັມຮອບແຫ່ງກຸສົລລະທັມທີ່ເກີດຂຶ້ນແລ້ວ

**ອະຍັງ ວຸຈຈະຕິ ພິກຂະເວ ສັມມາວາຍາໂມ** ດູກ່ອນພິກຂຸທັງຫລາຍ, ອັນນີ້ເຮົາກ່າວວ່າ **ຄວາມພາກພຽນຊອບ.**

**(ອົງມັຄທີ ກ)**

**ກະຕະມາ ຈະ ພິກຂະເວ ສັມມາສະຕິ** ດູກ່ອນພິກຂຸທັງຫລາຍ, ຄວາມຣະນຶກຊອບເປັນຢ່າງໃດເລົ່າ?

**ອິທະ ພິກຂະເວ ພິກຂຸ** ດູກ່ອນພິກຂຸທັງຫລາຍ, ພິກຂຸໃນທັມວິນັຍນີ້

**ກາເຍ ກາຍານຸປັສສີ ວິຫະຣະຕິ** ຍ່ອມເປັນຜູ້ພິຈາຣະນາເຫັນກາຍໃນກາຍຢູ່ເປັນປະຈຳ

**ອາຕາປີ ສັມປະຊາໂນ ສະຕິມາ, ວິເນຍຍະ ໂລເກ ອະພິຊຊາໂທມະນັສສັງ** ມີຄວາມພຽນເຄື່ອງເຜົາກິເລສ, ມີສັມປະຊັນຍະ ມີສະຕິ, ຖອນຄວາມພໍໃຈ ແລະຄວາມບໍ່ພໍໃຈໃນໂລກອອກເສັຽໄດ້

**ເວທະນາສຸເວທະນານຸປັສສີ ວິຫະຣະຕິ** ຍ່ອມເປັນຜູ້ພິຈາຣະນາເຫັນເວທະນາໃນເວທະນາທັງຫລາຍຢູ່ເປັນປະຈຳ

**ອາຕາປີ ສັມປະຊາໂນ ສະຕິມາ, ວິເນຍຍະ ໂລເກ ອະພິຊຊາໂທມະນັສສັງ** ມີຄວາມພຽນເຄື່ອງເຜົາກິເລສ, ມີສັມປະຊັນຍະ ມີສະຕິ, ຖອນຄວາມພໍໃຈ ແລະຄວາມບໍ່ພໍໃຈໃນໂລກອອກເສັຽໄດ້

**ຈິຕເຕ ຈິຕຕານຸປັສສີ ວິຫະຣະຕິ** ຍ່ອມເປັນຜູ້ພິຈາຣະນາເຫັນຈິຕໃນຈິຕຢູ່ເປັນປະຈຳ

**ອາຕາປີ ສັມປະຊາໂນ ສະຕິມາ, ວິເນຍຍະ ໂລເກ ອະພິຊຊາໂທມະນັສສັງ** ມີຄວາມພຽນເຄື່ອງເຜົາກິເລສ, ມີສັມປະຊັນຍະ ມີສະຕິ, ຖອນຄວາມພໍໃຈ ແລະຄວາມບໍ່ພໍໃຈໃນໂລກອອກເສັຽໄດ້

**ທັມເມສຸ ທັມມານຸປັສສີ ວິຫະຣະຕິ** ຍ່ອມເປັນຜູ້ພິຈາຣະນາເຫັນທັມໃນທັມທັງຫລາຍຢູ່ເປັນປະຈຳ

**ອາຕາປີ ສັມປະຊາໂນ ສະຕິມາ, ວິເນຍຍະ ໂລເກ ອະພິຊຊາໂທມະນັສສັງ** ມີຄວາມພຽນເຄື່ອງເຜົາກິເລສ, ມີສັມປະຊັນຍະ ມີສະຕິ, ຖອນຄວາມພໍໃຈ ແລະຄວາມບໍ່ພໍໃຈໃນໂລກອອກເສັຽໄດ້

**ອະຍັງ ວຸຈຈະຕິ ພິກຂະເວ ສັມມາສະຕິ** ດູກ່ອນພິກຂຸທັງຫລາຍ, ອັນນີ້ເຮົາກ່າວວ່າ **ຄວາມຣະນຶກຊອບ.**

(ອົງມັຄທີ ๘)

**ກະຕະໂມ ຈະ ພິກຂະເວ ສັມມາສະມາທິ** ດູກ່ອນພິກຂຸທັງຫລາຍ, ຄວາມຕັ້ງໃຈມັ່ນຊອບເປັນຢ່າງໃດເລົ່າ?

**ອິທະ ພິກຂະເວ ພິກຂຸ** ດູກ່ອນພິກຂຸທັງຫລາຍ, ພິກຂຸໃນທັມວິນັຍນີ້

**ວິວິຈເຈວະ ກາເມຫິ** ສງັດແລ້ວຈາກກາມທັງຫລາຍ

**ວິວິຈຈະ ອະກຸສະເລຫິ ທັມເມຫິ** ສງັດແລ້ວຈາກທັມທີ່ເປັນອະກຸສົລທັງຫລາຍ

**ສະວິຕັກກັງ ສະວິຈາຣັງ, ວິເວກະຊັງ, ປີຕິສຸຂັງ ປະຖະມັງຊານັງ ອຸປະສັມປັຊຊະ ວິຫະຣະຕິ**

ເຂົ້າເຖິງປະຖົມມະຊານ, ປະກອບດ້ວຍວິຕົກ ວິຈານ, ມີປີຕິ ແລະສຸກອັນເກີດຈາກວິເວກແລ້ວແລຢູ່

**ວິຕັກກະວິຈາຣະນັງ ວູປະສະມາ** ເພາະຄວາມທີ່ວິຕົກວິຈານທັງ ໒ ລະງັບລົງ

**ອັຊຊັຕຕັງ ສັມປະສາທະນັງ ເຈຕະໂສ, ເອໂກທິພາວັງ, ອະວິຕັກກັງ ອະວິຈາຣັງ, ສະມາທິຊັງ ປີຕິສຸຂັງ ທຸຕິຍັງ ຊານັງ ອຸປະສັມ ປັຊຊະ ວິຫະຣະຕິ** ເຂົ້າເຖິງທຸຕິຍະຊານ, ເປັນເຄື່ອງຜ່ອງໃສແຫ່ງໃຈໃນພາຍໃນ, ໃຫ້ສະມາທິ ເປັນທັມອັນເອກຜຸດຂຶ້ນ, ບໍ່ມີ ວິຕົກບໍ່ມີວິຈານ, ມີແຕ່ປີຕິ ແລະສຸກອັນເກີດຈາກສະມາທິແລ້ວແລຢູ່

**ປີຕິຍາ ຈະ ວິຣາຄາ** ອັນນຶ່ງ ເພາະຄວາມຈາງຄາຍໄປແຫ່ງປີຕິ

**ອຸເປກຂະໂກ ຈະ ວິຫະຣະຕິ, ສະໂຕ ຈະ ສັມປະຊາໂນ** ຍ່ອມເປັນຜູ້ຢູ່ອຸເບກຂາ, ມີສະຕິແລະສັມປະຊັນຍະ

**ສຸຂັນຈະ ກາເຍນະ ປະຕິສັງເວເທຕິ** ແລະຍ່ອມສເວີຍຄວາມສຸກດ້ວຍນາມກາຍ

**ຍັນຕັງ ອະຣິຍາ ອາຈິກຂັນຕິ, ອຸເປກຂະໂກ ສະຕິມາ ສຸຂະວິຫາຣີຕິ** ຊນິດທີ່ພຣະອະຣິຍະເຈົ້າທັງຫລາຍ, ຍ່ອມກ່າວສັນລະເສີນຜູ້ນັ້ນວ່າ, ເປັນຜູ້ຢູ່ອຸເບກຂາມີສະຕິຢູ່ເປັນປົກກະຕິສຸກ ດັ່ງນີ້

**ຕະຕິຍັງ ຊານັງ ອຸປະສັມປັຊຊະ ວິຫະຣະຕິ** ເຂົ້າເຖິງຕະຕິຍະຊານ ແລ້ວແລຢູ່

**ສຸຂັສສະ ຈະ ປະຫານາ** ເພາະລະສຸກເສັຽໄດ້

**ທຸກຂັສສະ ຈະ ປະຫານາ** ແລະເພາະລະທຸກເສັຽໄດ້

**ປຸພເພວະ ໂສມະນັສສະໂທມະນັສສານັງ ອັຕຖັງຄະມາ**

ເພາະຄວາມດັບໄປແຫ່ງໂສມະນັສແລະໂທມະນັສທັງ ໔ ໃນກາລກ່ອນ

**ອະທຸກຂະມະສຸຂັງ ອຸເປກຂາສະຕິປາຣິສຸທທິງ, ຈະຕຸຕຖັງ ຊານັງ ອຸປະສັມປັຊຊະ ວິຫະຣະຕິ** ເຂົ້າເຖິງ ຈະຕຸຕຖະຊານ, ບໍ່ມີທຸກບໍ່ມີສຸກ, ມີແຕ່ຄວາມທີ່ສະຕິເປັນທັມມະຊາດບໍຣິສຸດເພາະອຸເບກຂາ ແລ້ວແລຢູ່

**ອະຍັງ ວຸຈຈະຕິ ພິກຂະເວ ສັມມາສະມາທິ** ດູກ່ອນພິກຂຸທັງຫລາຍ, ອັນນີ້ເຮົາກ່າວວ່າ **ຄວາມຕັ້ງໃຈໝັ້ນຊອບ.**



# 5.10 ພຸທທະພາສິດສຳຄັນໃນອານາປານະສະຕິສູດ (ແປ)

## ຂັ້ນຂອງການຝຶກອານາປານະສະຕິທີ່ສົມບູນ

### (ທັນທະ ມະຍັງ ນານາສາຣັດຖະ ອານາປານະສະຕິ ພຸທທະພາສິດັງ ປາຖັງ ພະນາມະ ເສ)

**ອະຍັມປິ ໂຂ ພິກຂະເວ, ອານາປານະສະຕິ ສະມາທິ ພາວິໂຕ ພະຫຸລີກະໂຕ**

ດູກ່ອນພິກຂຸທັງຫລາຍ, ອານາປານະສະຕິສະມາທິ ອັນບຸກຄົນຈະເຣີນໃຫ້ມາກ ທຳໃຫ້ມາກແລ້ວ

**ສັນໂຕ ເຈວະ ປະນີໂຕ ຈະ ອະເສຈະນະໂກ ຈະ** ຍ່ອມເປັນສະພາບອັນສງົບ ປະນີດແລະຊື່ນໃຈ

**ສຸໂຂ ຈະ ວິຫາໂຣ ອຸປປັນນຸປປັນເນ ຈະ, ປາປະເກ ອະກຸສະເລ ທັມເມ ຖານະໂສອັນຕະຣະທາເປຕິ ວູປະສະເມຕິ**

ເປັນທັມທີ່ທຳໃຫ້ເກີດຄວາມຜາສຸກແຫ່ງຈິດ, ແລະຍັງອະກຸສົລລະທັມອັນລາມົກທີ່ເກີດຂຶ້ນແລ້ວໃຫ້ອັນຕະຣະທານໄປໂດຍພະລັນ

**ເສຍຍະຖາປິ ພິກຂະເວ ຄິມຫານັງ ປັຈສິເມ ມາເສ** ດູກ່ອນພິກຂຸທັງຫລາຍ, ເໝືອນເດືອນທ້າຍໆ ແຫ່ງຣະດູຮ້ອນ

**ອູຫະຕັງ ຣະໂຊ ຊັລລັງ** ຝຸ່ນທຸລີລະອອງຍ່ອມຟຸ້ງຂຶ້ນ

**ຕະເມນັງ ມະຫາອະກາລະເມໂຄ ຖານະໂສ ອັນຕະຣະທາເປຕິ ວູປະສະເມຕິ**

ຝົນໃຫຍ່ບໍ່ແມ່ນລະດູການຕົກລົງມາ, ຍ່ອມຍັງທຸລີລະອອງນັ້ນ ໃຫ້ອັນຕະຣະທານສງົບໄປສັນໃດ

**ເອວະເມ ໂຂ ພິກຂະເວ ອານາປານະສະຕິ ສະມາທິ ພາວິໂຕ ພະຫຸລີກະໂຕ**

ສະມາທິອັນປະກອບດ້ວຍສະຕິໃນລົມຫາຍໃຈເຂົ້າອອກ, ອັນບຸຄຄົນຈະເຣີນໃຫ້ມາກ ທຳໃຫ້ມາກແລ້ວ

**ສັນໂຕ ເຈວະ ປະນີໂຕ ຈະ ອະເສຈະນະໂກ ຈະ** ຍ່ອມເປັນສະພາບອັນສງົບ ປະນີດແລະຊື່ນໃຈ

**ສຸໂຂ ຈະ ວິຫາໂຣ ອຸປປັນນຸປປັນເນ ຈະ, ປາປະເກ ອະກຸສະເລ ທັມເມ ຖານະໂສອັນຕະຣະທາເປຕິ ວູປະສະເມຕິ**

ເປັນທັມທີ່ທຳໃຫ້ເກີດຄວາມຜາສຸກແຫ່ງຈິດ, ແລະຍັງອະກຸສົລລະທັມອັນລາມົກທີ່ເກີດຂຶ້ນແລ້ວໃຫ້ອັນຕະຣະທານໄປໂດຍພະລັນ

**ອະຫັມປິ ສຸທັງ ພິກຂະເວ, ປຸພເພວະ ສັມໂພທາ ອະນະພິສັມພຸທໂທ ໂພທິສັຕໂຕວະ**

ດູກ່ອນພິກຂຸທັງຫລາຍ, ເມື່ອກ່ອນແຕ່ເຮົາຍັງບໍ່ຕຣັສຮູ້ ເຮົາຍັງເປັນໂພທິສັຕຢູ່

**ສະມາໂນ ອິມິນາ ວິຫາເຣນະ, ອານາປານະສະຕິ ພະຫຸລັງ ວິຫະຣາມິ**

ເຮົາຍ່ອມເປັນຢູ່ດ້ວຍວິຫາຣະທັມ, ຄື ອານາປານະສະຕິນີ້ແລ ເປັນສ່ວນມາກ

**ຕັສສະ ມັຍຫັງ ພິກຂະເວ, ອິມິນາ ວິຫາເຣນະ ພະຫຸລັງ ວິຫະຣະໂຕ**

ດູກ່ອນພິກຂຸທັງຫລາຍ, ເມື່ອເຮົາເປັນຢູ່ດ້ວຍວິຫາຣະທັມນີ້ເປັນສ່ວນມາກແລ້ວ

**ເນວະ ເມ ກາໂຍ ກິລະມະຕິ, ນະ ຈັກຂູນິ ອະນຸປາທາຍະ, ຈະ ເມ ອາສະເວຫິ ຈິຕຕັງ ວິມຸຈຈະຕິ** ດູກ່ອນພິກຂຸທັງຫລາຍ, ກາຍຂອງເຮົາບໍ່ລຳບາກ ຕາຂອງເຮົາບໍ່ລຳບາກ, ຈິຕຂອງເຮົາກໍຫລຸດພົ້ນຈາກອາສະວະທັງປວງ, ເພາະຄວາມບໍ່ຖືມັ່ນ

**ຕັສສະມາຕິຫະ ພິກຂະເວ ພິກຂູ ເຈປິ ອາກັງເຂຍຍະ** ດູກ່ອນພິກຂຸທັງຫລາຍ, ເພາະເຫຕນັ້ນແລ, ຖ້າພິກຂຸໃນທັມວິນັຍນີ້ຈັກເພິ່ງຫວັງວ່າ

**ເນວະ ເມ ກາໂຍປິ ກິລະເມຍຍະ, ນະ ຈັກຂູນິ ອະນຸປາທາຍະ, ຈະ ເມ ອາສະເວຫິ ຈິຕຕັງ ວິມຸຈເຈຍຍາຕິ**

ແມ່ນກາຍຂອງເຮົາກໍຈັກບໍ່ລຳບາກ, ຕາຂອງເຮົາກໍຈັກບໍ່ລຳບາກ, ຈິຕຂອງເຮົາກໍຈັກເພິ່ງຫລຸດພົ້ນຈາກອາສະວະທັງປວງ, ເພາະຄວາມບໍ່ຖືໝັ້ນແລ້ວ

**ອະຍະເມວະ ອານາປານະສະຕິ ສະມາທິ ສາທຸກັງ ມະນະສິກາຕັພໂພ** ທ່ານທັງຫລາຍຈົ່ງທຳໄວ້ໃນໃຈໃຫ້ດີໆ, ຊຶ່ງອານາປານະສະຕິສະມາທິນີ້ແລ

**ອານາປານະສະຕິ ພິກຂະເວ, ພາວິຕາ ພະຫຸລີກະຕາ** ດູກ່ອນພິກຂຸທັງຫລາຍ, ອານາປານະສະຕິອັນບຸກຄົນຈະເຣີນທຳໃຫ້ມາກແລ້ວ

**ມະຫັປຜະລາ ໂຫຕິ ມະຫານິສັງສາ** ຍ່ອມມີຜົນໃຫຍ່ ມີອານິສົງໃຫຍ່

**ອານາປານະສະຕິ ພິກຂະເວ ພາວິຕາ ພະຫຸລີກະຕາ** ດູກ່ອນພິກຂຸທັງຫລາຍ, ອານາປານະສະຕິອັນບຸກຄົນຈະເຣີນທຳໃຫ້ມາກແລ້ວ

**ຈັຕຕາໂຣ ສະຕິປັຕຖາເນ ປະຣິປູເຣນຕິ** ຍ່ອມທຳສະຕິປັຕຖານທັງ ໔ ໃຫ້ບໍຣິບູນ

**ຈັຕຕາໂຣ ສະຕິປັຕຖານາ ພາວິຕາ ພະຫຸລີກະຕາ** ສະຕິປັຕຖານທັງ ໔ ອັນບຸນຄົນຈະເຣີນທຳໃຫ້ມາກແລ້ວ

**ສັຕຕະໂພຊຊັງເຄ ປະຣິປູເຣນຕິ** ຍ່ອມທຳໂພຊຊົງທັງ ໗ ໃຫ້ບໍຣິບູນ

**ສັຕຕະໂພຊຊັງຄາ ພາວິຕາ ພະຫຸລີກະຕາ** ໂພຊຊົງທັງ ໗ ອັນບຸກຄົນຈະເຣີນທຳໃຫ້ມາກແລ້ວ

**ວິຊຊາ ວິມຸຕຕິງ ປະຣິປູເຣນຕິ** ຍ່ອມທຳວິຊຊາ ແລະວິມຸຕ ໃຫ້ບໍຣິບູນ

**ກະຖັງ ພາວິຕາ ຈະ ພິກຂະເວ, ອານາປານະສະຕິ ກະຖັງ ພະຫຸລີກະຕາ** ດູກ່ອນພິກຂຸທັງຫລາຍ, ກໍອານາປານະສະຕິອັນບຸກຄົນ ຈະເຣີນທຳໃຫ້ມາກແລ້ວຢ່າງໃດເລົ່າ?

**ມະຫັປຜະລາ ໂຫຕິ ມະຫານິສັງສາ** ຈຶ່ງມີຜົນໃຫຍ່ ມີອານິສົງໃຫຍ່

**ອິທະ ພິກຂະເວ ພິກຂຸ** ດູກ່ອນພິກຂຸທັງຫລາຍ, ພິກຂຸໃນທັມວິນັຍນີ້

**ອະຣັນຍະຄະໂຕ ວາ** ໄປແລ້ວສູ່ປ່າ ກໍຕາມ

**ຣຸກຂະມູລະຄະໂຕ ວາ** ໄປແລ້ວສູ່ໂຄນໄມ້ ກໍຕາມ

**ສຸນຍາຄາຣະຄະໂຕ ວາ** ໄປແລ້ວສູ່ເຮືອນວ່າງ ກໍຕາມ

**ນິສີທະຕິ ປັລລັງກັງ ອາພຸຊິຕະວາ** ນັ່ງຄູ້ຂາເຂົ້າມາໂດຍຮອບແລ້ວ

**ອຸຊຸງ ກາຍັງ ປະນິທາຍະ, ປະຣິມຸຂັງ ສະຕິງ ອຸປັຕຖະເປຕະວາ** ຕັ້ງກາຍຕົງ ດຳລົງສະຕິຫມັ້ນ

**ໂສ ສະໂຕ ວະ ອັສສະສະຕິ, ສະໂຕ ປັສສະສະຕິ** ພິກຂຸນັ້ນ ເປັນຜູ້ມີສະຕິຢູ່ນັ້ນແລ ຫາຍໃຈເຂົ້າ ມີສະຕິຢູ່ ຫາຍໃຈອອກ

**໑. ທີຄັງ ວາ ອັສສະສັນໂຕ ທີຄັງ ອັສສະປັສສະສາມີຕິ ປະຊານາຕິ**

ພິກຂຸນັ້ນ ເມື່ອຫາຍໃຈເຂົ້າຍາວ, ກໍຮູ້ສຶກຕົວທົ່ວເຖິງວ່າ ເຮົາຫາຍໃຈເຂົ້າຍາວ ອອກຍາວ ດັ່ງນີ້

**໒. ຣັສສັງ ວາ ອັສສະສັນໂຕ ຣັສສັງ ອັສສະປັສສະສາມີຕິ ປະຊານາຕິ**

ພິກຂຸນັ້ນ ເມື່ອຫາຍໃຈເຂົ້າສັ້ນ, ກໍຮູ້ສຶກຕົວທົ່ວເຖິງວ່າ ເຮົາຫາຍໃຈເຂົ້າສັ້ນ ອອກສັ້ນ ດັ່ງນີ້

**໓. ສັພພະກາຍະປະຕິສັງເວທີ ອັສສະປັສສະສິສສາມີຕິ ສິກຂະຕິ**

ພິກຂຸນັ້ນ ຍ່ອມທຳໃນບົດສຶກສາວ່າ, ເຮົາເປັນຜູ້ຮູ້ພ້ອມສະເພາະຊຶ່ງກາຍທັງປວງ(ກອງລົມ) ຈັກຫາຍໃຈເຂົ້າ ຫາຍໃຈອອກ ດັ່ງນີ້

**໔. ປັສສັມພະຍັງ ກາຍະສັງຂາຣັງ ອັສສະປັສສະສິສສາມີຕິ ສິກຂະຕິ**

ພິກຂຸນັ້ນ ຍ່ອມທຳໃນບົດສຶກສາວ່າ, ເຮົາເປັນຜູ້ທຳກາຍສັງຂາຣໃຫ້ຣະງັບຢູ່, ຈັກຫາຍໃຈເຂົ້າ ຫາຍໃຈອອກ ດັ່ງນີ້

(ຈົບຈະຕຸກກະທີ ໑ ກາຍານຸປັສສະນາ)

**໕. ປີຕິປະຕິສັງເວທີ ອັສສະປັສສະສິສສາມີຕິ ສິກຂາຕິ**

ພິກຂຸນັ້ນ ຍ່ອມທຳໃນບົດສຶກສາວ່າ, ເຮົາເປັນຜູ້ຮູ້ພ້ອມສະເພາະຊຶ່ງປີຕິ ຈັກຫາຍໃຈເຂົ້າ ຫາຍໃຈອອກ ດັ່ງນີ້

**໖. ສຸຂະປະຕິສັງເວທີ ອັສສະປັສສະສິກສສາມີຕິ ສິກຂະຕິ**

ພິກຂຸນັ້ນ ຍ່ອມທຳໃນບົດສຶກສາວ່າ, ເຮົາເປັນຜູ້ຮູ້ພ້ອມສະເພາະຊຶ່ງສຸກ ຈັກຫາຍໃຈເຂົ້າ ຫາຍໃຈອອກ ດັ່ງນີ້

**໗. ຈິຕຕະສັງຂາຣະປະຕິສັງເວທີ ອັສສະປັສສະສິສສາມີຕິ ສິກຂະຕິ**

ພິກຂຸນັ້ນ ຍ່ອມທຳໃນບົດສຶກສາວ່າ, ເຮົາເປັນຜູ້ຮູ້ພ້ອມສະເພາະຊຶ່ງຈິຕຕະສັງຂາຣ ຈັກຫາຍໃຈເຂົ້າ ຫາຍໃຈອອກ ດັ່ງນີ້

**໘. ປັສສັມພະຍັງ ຈິຕຕະສັງຂາຣັງ ອັສສະປັສະສິສສາມີຕິ ສິກຂະຕິ**

ພິກຂຸນັ້ນ ຍ່ອມທຳໃນບົດສຶກສາວ່າ, ເຮົາເປັນຜູ້ທຳຈິຕຕະສັງຂາຣໃຫ້ຣະງັບຢູ່, ຈັກຫາຍໃຈເຂົ້າ ຫາຍໃຈອອກ ດັ່ງນີ້

(ຈົບຈະຕຸກກະທີ ໔ ເວທະນານຸປັສສະນາ)

**໙. ຈິຕຕະປະຕິສັງເວທີ ອັສສະປັສສະສິສສາມີຕິ ສິກຂະຕິ**

ພິກຂຸນັ້ນ ຍ່ອມທຳໃນບົດສຶກສາວ່າ, ເຮົາເປັນຜູ້ຮູ້ພ້ອມສະເພາະຊຶ່ງຈິຕ, ຈັກຫາຍໃຈເຂົ້າ ຫາຍໃຈອອກ ດັ່ງນີ້

**໑໐. ອະພິປປະໂມທະຍັງ ຈິຕຕັງ ອັສສະປັສສະສິສສາມີຕິ ສິກຂະຕິ**

ພິກຂຸນັ້ນ ຍ່ອມທຳໃນບົດສຶກສາວ່າ, ເຮົາເປັນຜູ້ທຳຈິຕໃຫ້ປຣາໂມດຍິ່ງຢູ່, ຈັກຫາຍໃຈເຂົ້າ ຫາຍໃຈອອກ ດັ່ງນີ້

**໑໑. ສະມາທະຫັງ ຈິຕຕັງ ອັສສະປັສສະສິສສາມີຕິ ສິກຂະຕິ**

ພິກຂຸນັ້ນ ຍ່ອມທຳໃນບົດສຶກສາວ່າ, ເຮົາເປັນຜູ້ທຳຈິຕໃຫ້ຕັ້ງຫມັ້ນຢູ່, ຈັກຫາຍໃຈເຂົ້າ ຫາຍໃຈອອກ ດັ່ງນີ້

**໑໔. ວິໂມຈະຍັງ ຈິຕຕັງ ອັສສະປັສສະສິສສາມີຕິ ສິກຂະຕິ**

ພິກຂຸນັ້ນ ຍ່ອມທຳໃນບົດສຶກສາວ່າ, ເຮົາເປັນຜູ້ທຳຈິດໃຫ້ປ່ອຍຢູ່, ຈັກຫາຍໃຈເຂົ້າ ຫາຍໃຈອອກ ດັ່ງນີ້

(ຈົບຈະຕຸກກະທີ ၃ ຈິດຕານຸປັສສະນາ)

**໑໓. ອະນິຈຈານຸປັສສີ ອັສສະປັສສະສິສສາມີຕິ ສິກຂະຕິ**

ພິກຂຸນັ້ນ ຍ່ອມທຳໃນບົດສຶກສາວ່າ, ເຮົາເປັນຜູ້ຕາມເຫັນຊຶ່ງຄວາມບໍ່ທ່ຽງຢູ່ເປັນປະຈຳ, ຈັກຫາຍໃຈເຂົ້າ ຫາຍໃຈອອກ ດັ່ງນີ້

**໑໔. ວິຣາຄານຸປັສສີ ອັສສະປັສສະສິສສາມີຕິ ສິກຂະຕິ**

ພິກຂຸນັ້ນ ຍ່ອມທຳໃນບົດສຶກສາວ່າ, ເຮົາເປັນຜູ້ຕາມເຫັນຊຶ່ງຄວາມຈາງຄາຍຢູ່ເປັນປະຈຳ, ຈັກຫາຍໃຈເຂົ້າ ຫາຍໃຈອອກ ດັ່ງນີ້

**໑໕. ນິໂຣທານຸປັສສີ ອັສສະປັສສະສິສສາມີຕິ ສິກຂະຕິ**

ພິກຂຸນັ້ນ ຍ່ອມທຳໃນບົດສຶກສາວ່າ, ເຮົາເປັນຜູ້ຕາມເຫັນຊຶ່ງຄວາມດັບບໍ່ເຫລືອຢູ່ເປັນປະຈຳ,ຈັກຫາຍໃຈເຂົ້າຫາຍໃຈອອກດັ່ງນີ້

**໑໖. ປະຕິນິສສັຄຄານຸປັສສີ ອັສສະປັສສະສິສສາມີຕິ ສິກຂະຕິ**

ພິກຂຸນັ້ນ ຍ່ອມທຳໃນບົດສຶກສາວ່າ, ເຮົາເປັນຜູ້ຕາມເຫັນຊຶ່ງຄວາມສະລັດຄືນຢູ່ເປັນປະຈຳ, ຈັກຫາຍໃຈເຂົ້າ ຫາຍໃຈອອກ ດັ່ງນີ້

(ຈົບຈະຕຸກກະທີ ໔ ທັມມານຸປັສສະນາ)

**ເອວັງ ພາວິຕາ ໂຂ ພິກຂະເວ ອານາປານະສະຕິ ເອວັງ ພະຫຸລີກະຕາ**

ດູກ່ອນພິກຂຸທັງຫລາຍ, ອານາປານະສະຕິອັນບຸກຄົນຈະເຣີນແລ້ວ, ທຳໃຫ້ມາກແລ້ວ, ຢ່າງນີ້ແລ

**ມະຫັປຜະລາ ໂຫຕິ ມະຫານິສັງສາ** ຍ່ອມມີຜົລໃຫຍ່ ມີອານິສົງໃຫຍ່

**ອິຕິ...** ດ້ວຍປະການ ສະນີ້ແລ.

# 5.11 ອິທັປປັຈຈະຍະຕາໃນປະຕິຈຈະສະມຸປບາທ

**(ທັນທະ ນະຍັງ ປະຕິຈຈະສະມຸປປາທະທັມເມສຸ ອິທັປປັຈຈະຍະຕາທິ ທັມມະປາຖັງ ພະນາມະ ເສ)**

**ກະຕະໂມ ຈະ ພິກຂະເວ ປະຕິຈຈະສະມຸປປາໂທ** ດູກ່ອນພິກຂຸທັງຫລາຍ ກໍປະຕິຈຈະສະມຸປບາດ, ເປັນຢ່າງໃດເລົ່າ?

໑. **ຊາຕິປັຈຈະຍາ ພິກຂະເວ ຊະຣາມະຣະນັງ** ດູກ່ອນພິກຂຸທັງຫລາຍ, ເພາະຊາດເປັນປັຈຈັຍ ຊະຣາມະຣະນະຍ່ອມມີ

**ອຸປປາທາ ວາ ພິກຂະເວ ຕະຖາຄະຕານັງ, ອະນຸປປາທາ ວາ ຕະຖາຄະຕານັງ** ດູກ່ອນພິກຂຸທັງຫລາຍ, ເພາະເຫດທີ່ພຣະຕະຖາຄົດທັງຫລາຍ, ຈະບັງເກີດຂຶ້ນກໍຕາມ, ຈະບໍ່ບັງເກີດຂຶ້ນກໍຕາມ

**ຖິຕາວະ ສາ ທາຕຸ** ທັມມະທາດນັ້ນ, ຍ່ອມຕັ້ງຢູ່ແລ້ວ ນັ້ນແລ

**ທັມມັຕຖິຕະຕາ** ຄື ຄວາມຕັ້ງຢູ່ແຫ່ງທັມມະດາ

**ທັມມະນິຍາມະຕາ** ຄື ຄວາມເປັນກົດຕາຍຕົວແຫ່ງທັມມະດາ

**ອິທັປປັຈຈະຍະຕາ** ຄື ຄວາມທີ່ເມື່ອມີສິ່ງນີ້ ສິ່ງນີ້ເປັນປັຈຈັຍ, ສິ່ງນີ້ ສິ່ງນີ້ຈຶ່ງເກີດຂຶ້ນ

**ຕັງ ຕະຖາຄະໂຕ ອະພິສັມພຸຊຊະຕິ ອະພິສະເມຕິ** ຕະຖາຄົດຍ່ອມຮູ້ພ້ອມສະເພາະ, ຍ່ອມເຖິງພ້ອມສະເພາະ, ຊຶ່ງທັມມະທາດນັ້ນ

**ອະພິສັມພຸຊຊິຕຕະວາ ອະພິສະເມຕະວາ** ຄັນຮູ້ພ້ອມສະເພາະແລ້ວ, ເຖິງພ້ອມສະເພາະແລ້ວ

**ອາຈິກຂະຕິ ເທເສຕິ** ຍ່ອມບອກ, ຍ່ອມສະແດງ

**ປັນຍະເປຕິ ປັຕຖະເປຕິ** ຍ່ອມບັນຍັດ, ຍ່ອມຕັ້ງຂຶ້ນໄວ້

**ວິວະຣະຕິ ວິພະຊະຕິ** ຍ່ອມເປີດເຜີຍ, ຍ່ອມຈຳແນກແຈກແຈງ

**ອຸຕຕານີກະໂຣຕິ** ຍ່ອມທຳໃຫ້ເປັນເໝືອນການຫງາຍຂອງທີ່ຄວ່ຳ

**ປັສສະຖາຕິ ຈາຫະ, ຊາຕິປັຈຈະຍາ ພິກຂະເວ ຊະຣາມະຣະນັງ** ແລະໄດ້ກ່າວແລ້ວໃນບັດນີ້ວ່າ, ດູກ່ອນພິກຂຸທັງຫລາຍ, ທ່ານທັງຫລາຍຈົ່ງມາເບິ່ງ ເພາະຊາຕເປັນປັຈຈັຍ ຊະຣາມະຣະນະຍ່ອມມີ

**ອິຕິ ໂຂ ພິກຂະເວ** ດູກ່ອນພິກຂຸທັງຫລາຍ, ເພາະເຫຕດັ່ງນີ້ ແລ

**ຍາ ຕັຕຕະຣະຕະຖະຕາ** ທັມມະທາຕໃດ, ໃນກໍຣະນີນັ້ນ, ອັນເປັນຕະຖະຕາ, ຄືຄວາມເປັນຢ່າງນັ້ນ

**ອະວິຕະຖະຕາ** ເປັນອະວິຕະຖະຕາ, ຄືຄວາມບໍ່ຜິດໄປຈາກຄວາມເປັນຢ່າງນັ້ນ

**ອະນັນຍະຖະຕາ** ເປັນອະນັນຍະຖະຕາ, ຄືຄວາມບໍ່ເປັນໄປໂດຍປະການອື່ນ

**ອິທັປປັຈຈະຍະຕາ** ເປັນອິທັປປັຈຈະຍະຕາ, ຄືຄວາມທີ່ເມື່ອມີສິ່ງນີ້ສິ່ງນີ້ເປັນປັຈຈັຍ, ສິ່ງນີ້ ສິ່ງນີ້ ຈຶ່ງເກີດຂຶ້ນ

**ອະຍັງ ວຸຈຈະຕິ ພິກຂະເວ ປະຕິຈຈະສະມຸປປາໂທ** ດູກ່ອນພິກຂຸທັງຫລາຍ, ທັມນີ້, ເຮົາຮຽກວ່າປະຕິຈຈະສະມຸປບາຕ ຄືທັມອັນເປັນທັມມະຊາດ, ອາສັຍກັນແລ້ວເກີດຂຶ້ນ

໔. **ພະວະປັຈຈະຍາ ພິກຂະເວ ຊາຕິ** ດູກ່ອນພິກຂຸທັງຫລາຍ, ເພາະພົບເປັນປັຈຈັຍ, ຊາດຍ່ອມມີ

**ປັສສະຖາຕິ ຈາຫະ, ພະວະປັຈຈະຍາ ພິກຂະເວ ຊາຕິ** ແລະໄດ້ກ່າວແລ້ວໃນບັດນີ້ວ່າ: ດູກ່ອນພິກຂຸທັງຫລາຍ, ທ່ານທັງຫລາຍຈົ່ງມາເບິ່ງ, ເພາະພົບເປັນປັຈຈັຍ, ຊາດຍ່ອມມີ

໕. **ອຸປາທານະປັຈຈະຍາ ພິກຂະເວ ພະໂວ** ດູກ່ອນພິກຂຸທັງຫລາຍ, ເພາະອຸປະທານເປັນປັຈຈັຍ, ພົບຍ່ອມມີ

**ປັສສະຖາຕິ ຈາຫະ, ອຸປາທານະປັຈຈະຍາ ພິກຂະເວ ພະໂວ** ແລະໄດ້ກ່າວແລ້ວໃນບັດນີ້ວ່າ, ດູກ່ອນພິກຂຸທັງຫລາຍ, ທ່ານທັງຫລາຍຈົ່ງມາເບິ່ງ, ເພາະອຸປາທານເປັນປັຈຈັຍ, ພົບຍ່ອມມີ

**໔. ຕັນຫາປັຈຈະຍາ ພິກຂະເວ ອຸປາທານັງ** ດູກ່ອນພິກຂຸທັງຫລາຍ, ເພາະຕັນຫາເປັນປັຈຈັຍ, ອຸປາທານຍ່ອມມີ
**ປັສສະຖາຕິ ຈາຫະ, ຕັນຫາປັຈຈະຍາ ພິກຂະເວ ອຸປາທານັງ** ແລະໄດ້ກ່າວແລ້ວໃນບັດນີ້ວ່າ, ດູກ່ອນພິກຂຸທັງຫລາຍ, ທ່ານທັງຫລາຍຈົ່ງມາເບິ່ງ, ເພາະຕັນຫາເປັນປັຈຈັຍ, ອຸປະທານຍ່ອມມີ

**໕. ເວທະນາປັຈຈະຍາ ພິກຂະເວ ຕັນຫາ** ດູກ່ອນພິກຂຸທັງຫລາຍ, ເພາະເວທະນາເປັນປັຈຈັຍ, ຕັນຫາຍ່ອມມີ
**ປັສສະຖາຕິ ຈາຫະ, ເວທະນາປັຈຈະຍາ ພິກຂະເວ ຕັນຫາ** ແລະໄດ້ກ່າວແລ້ວໃນບັດນີ້ວ່າ, ດູກ່ອນພິກຂຸທັງຫລາຍ, ທ່ານທັງຫລາຍຈົ່ງມາເບິ່ງ, ເພາະເວທະນາເປັນປັຈຈັຍ, ຕັນຫາຍ່ອມມີ

**໖. ຜັສສະປັຈຈະຍາ ພິກຂະເວ ເວທະນາ** ດູກ່ອນພິກຂຸທັງຫລາຍ, ເພາະຜັສສະເປັນປັຈຈັຍ, ເວທະນາຍ່ອມມີ
**ປັສສະຖາຕິ ຈາຫະ, ຜັສສະປັຈຈະຍາ ພິກຂະເວ ເວທະນາ** ແລະໄດ້ກ່າວແລ້ວໃນບັດນີ້ວ່າ, ດູກ່ອນພິກຂຸທັງຫລາຍ, ທ່ານທັງຫລາຍຈົ່ງມາເບິ່ງ, ເພາະຜັສສະເປັນປັຈຈັຍ, ເວທະນາຍ່ອມມີ

**໗. ສະລາຍະຕະນະປັຈຈະຍາ ພິກຂະເວ ຜັສໂສ** ດູກ່ອນພິກຂຸທັງຫລາຍ, ເພາະສະລາຍະຕະນະເປັນປັຈຈັຍ, ຜັສສະຍ່ອມມີ
**ປັສສະຖາຕິ ຈາຫະ, ສະລາຍະຕະນະປັຈຈະຍາ ພິກຂະເວ ຜັສໂສ** ແລະໄດ້ກ່າວແລ້ວໃນບັດນີ້ວ່າ, ດູກ່ອນພິກຂຸທັງຫລາຍ, ທ່ານທັງຫລາຍຈົ່ງມາເບິ່ງ, ເພາະສະລາຍະຕະນະເປັນປັຈຈັຍ, ຜັສສະຍ່ອມມີ

**໘. ນາມະຣູປະປັຈຈະຍາ ພິກຂະເວ ສະລາຍະຕະນັງ** ດູກ່ອນພິກຂຸທັງຫລາຍ, ເພາະນາມະຣູປເປັນປັຈຈັຍ, ສະລາຍະຕະນະຍ່ອມມີ
**ປັສສະຖາຕິ ຈາຫະ, ນາມະຣູປະປັຈຈະຍາ ພິກຂະເວ ສະລາຍະຕະນັງ** ແລະໄດ້ກ່າວແລ້ວໃນບັດນີ້ວ່າ, ດູກ່ອນພິກຂຸທັງຫລາຍ, ທ່ານທັງຫລາຍຈົ່ງມາເບິ່ງ, ເພາະນາມະຣູປເປັນປັຈຈັຍ, ສະລາຍະຕະນະຍ່ອມມີ

**໙. ວິນຍານະປັຈຈະຍາ ພິກຂະເວ ນາມະຣູປັງ** ດູກ່ອນພິກຂຸທັງຫລາຍ, ເພາະວິນຍານເປັນປັຈຈັຍ, ນາມະຣູປຍ່ອມມີ

**ປັສສະຖາຕິ ຈາຫະ, ວິນຍານະປັຈຈະຍາ ພິກຂະເວ ນາມະຣູປັງ** ແລະໄດ້ກ່າວແລ້ວໃນບັດນີ້ວ່າ,

ດູກ່ອນພິກຂຸທັງຫລາຍ, ທ່ານທັງຫລາຍຈົ່ງມາເບິ່ງ, ເພາະວິນຍານເປັນປັຈຈັຍ, ນາມະຣູປຍ່ອມມີ

**໑໐. ສັງຂາຣະປັຈຈະຍາ ພິກຂະເວ ວິນຍານັງ** ດູກ່ອນພິກຂຸທັງຫລາຍ, ເພາະສັງຂາຣເປັນປັຈຈັຍ, ວິນຍານຍ່ອມມີ

**ປັສສະຖາຕິ ຈາຫະ, ສັງຂາຣະປັຈຈະຍາ ພິກຂະເວ ວິນຍານັງ** ແລະໄດ້ກ່າວແລ້ວໃນບັດນີ້ວ່າ, ດູກ່ອນພິກ

ຂຸທັງຫລາຍ, ທ່ານທັງຫລາຍຈົ່ງມາເບິ່ງ, ເພາະສັງຂາຣເປັນປັຈຈັຍ, ວິນຍານຍ່ອມມີ

**໑໑. ອະວິຊຊາປັຈຈະຍາ ພິກຂະເວ ສັງຂາຣາ** ດູກ່ອນພິກຂຸທັງຫລາຍ, ເພາະອະວິຊຊາເປັນປັຈຈັຍ, ສັງຂາຣຍ່ອມມີ

**ອຸປປາທາ ວາ ພິກຂະເວ ຕະຖາຄະຕານັງ, ອະນຸປປາທາ ວາ ຕະຖາຄະຕານັງ** ດູກ່ອນພິກຂຸທັງຫລາຍ,

ເພາະເຫດທີ່ພຣະຕະຖາຄົດທັງຫລາຍ, ຈະບັງເກີດຂຶ້ນກໍຕາມ, ຈະບໍ່ບັງເກີດຂຶ້ນກໍຕາມ

**ຖິຕາ ວະ ສາ ທາຕຸ** ທັມມະທາຕນັ້ນ, ຍ່ອມຕັ້ງຢູ່ແລ້ວ, ນັ້ນຈິງ

**ທັມມັຕຖິຕະຕາ** ຄື ຄວາມຕັ້ງຢູ່ແຫ່ງທັມມະດາ

**ທັມມະນິຍາມະຕາ** ຄື ຄວາມເປັນກົດຕາຍຕົວແຫ່ງທັມມະດາ

**ອິທັປປັຈຈະຍະຕາ** ຄື ຄວາມທີ່ເມື່ອມີສິ່ງນີ້ ສິ່ງນີ້ເປັນປັຈຈັຍ, ສິ່ງນີ້ ສິ່ງນີ້ຈຶ່ງເກີດຂຶ້ນ

**ຕັງ ຕະຖາຄະໂຕ ອະພິສັມພຸຊຊະຕິ ອະພິສະເມຕິ** ຕະຖາຄົດຍ່ອມຮູ້ພ້ອມສະເພາະ, ຍ່ອມເຖິງພ້ອມສະເພາະ,

ຊຶ່ງທັມມະທາຕນັ້ນ

**ອະພິສັມພຸຊຊິຕະວາ ອະພິສະເມຕະວາ** ຄັນຮູ້ພ້ອມສະເພາະແລ້ວ, ເຖິງພ້ອມສະເພາະແລ້ວ

**ອາຈິກຂະຕິ ເທເສຕິ** ຍ່ອມບອກ, ຍ່ອມສະແດງ

**ປັນຍະເປຕິ ປັຕຖະເປຕິ** ຍ່ອມບັນຍັດ, ຍ່ອມຕັ້ງຂຶ້ນໄວ້

**ວິວະຣະຕິ ວິພະຊະຕິ** ຍ່ອມເປີດເຜີຍ, ຍ່ອມຈຳແນກແຈກແຈງ

**ອຸຕຕານີກະໂຣຕິ** ຍ່ອມທຳໃຫ້ເປັນເໝືອນການຫງາຍຂອງທີ່ຄວ້ຳ

**ປັສສະຖາຕິ ຈາຫະ, ອະວິຊຊາປັຈຈະຍາ ພິກຂະເວ ສັງຂາຣາ** ແລະໄດ້ກ່າວແລ້ວໃນບັດນີ້ວ່າ, ດູກ່ອນພິກຂຸທັງຫລາຍ, ທ່ານທັງຫລາຍຈົ່ງມາເບິ່ງ, ເພາະອະວິຊຊາເປັນປັຈຈັຍ, ສັງຂາຣຍ່ອມມີ

**ອິຕິ ໂຂ ພິກຂະເວ** ດູກ່ອນພິກຂຸທັງຫລາຍ, ເພາະເຫຕດັ່ງນີ້ ແລ

**ຍາຕັຕຕະຣະຕະຖະຕາ** ທັມມະທາຕໃດ, ໃນກໍຣະນີນັ້ນ, ອັນເປັນຕະຖະຕາ, ຄືຄວາມເປັນຢ່າງນັ້ນ

**ອະວິຕະຖະຕາ** ເປັນ ອະວິຕະຖະຕາ, ຄືຄວາມບໍ່ຜິດໄປຈາກຄວາມເປັນຢ່າງນັ້ນ

**ອະນັນຍະຖະຕາ** ເປັນອະນັນຍະຖະຕາ, ຄືຄວາມບໍ່ເປັນໄປໂດຍປະການອື່ນ

**ອິທັປປັຈຈະຍະຕາ** ເປັນອິທັປປັຈຈະຍະຕາ, ຄືຄວາມທີ່ເມື່ອມີສິ່ງນີ້ສິ່ງນີ້ເປັນປັຈຈັຍ, ສິ່ງນີ້ ສິ່ງນີ້ຈຶ່ງເກີດຂຶ້ນ

**ອະຍັງ ວຸຈຈະຕິ ພິກຂະເວ ປະຕິຈຈະສະມຸປປາໂທ** ດູກ່ອນພິກຂຸທັງຫລາຍ, ທັມນີ້, ເຮົາຮຽກວ່າປະຕິຈຈະສະມຸປບາຕຄື (ທັມອັນເປັນທັມມະຊາດ, ອາສັຍກັນແລ້ວເກີດຂຶ້ນ)

**ອິຕິ...** ດ້ວຍປະການ ສະນີ້ແລ.

# 5.12 ຄຳສະມາທານກ່ອນນັ່ງສະມາທິ

**ນະໂມ ຕັສສະ ພະຄະວະໂຕ ອະຣະຫະໂຕ, ສັມມາສັມພຸທທັສສະ** (ວ່າ ໓ ເທື່ອ)

**ພຸທທັງ, ທັມມັງ, ສັງຄັງ ນະມັສສາມິ.**

**ອຸກາສະ ອຸກາສະ ນະ ໂອກາສບັດນີ້ ຂ້າພະເຈົ້າ ຂໍສະມາທານ ຊຶ່ງພຣະກັມມະຖານ ຂໍຂະນິກະສະມາທິ, ອຸປະຈາຣະສະມາທິ, ອັປປະນາສະມາທິ ແລະວິປັສສະນາຍານ ຂໍຈົ່ງບັງເກີດຂຶ້ນ ໃນຂັນທະສັນດານ ຂອງຂ້າພະເຈົ້າ, ຂ້າພະເຈົ້າຈະຕັ້ງສະຕິກຳນົດໄວ້ ທີ່ລົມຫາຍໃຈເຂົ້າອອກ, ລົມຫາຍໃຈເຂົ້າຮູ້, ລົມຫາຍໃຈອອກຮູ້, ສາມທົບແລະເຈັດທົບ, ຮ້ອຍທົບແລະພັນທົບ, ດ້ວຍຄວາມບໍ່ປະມາດ ຕັ້ງແຕ່ບັດນີ້ເປັນຕົ້ນໄປເທີ້ນ.**

ຈາກນັ້ນ, ກໍເລີ່ມນັ່ງສະມາທິ ໂດຍເອົາຂາຂວາທັບຂາຊ້າຍ, ມືຂວາທັບມືຊ້າຍ ວາງໄວ້ທີ່ຫນ້າຕັກ, ອຽງຊ້າຍ, ອຽງຂວາ, ອຽງຫນ້າ, ອຽງຫລັງ ເພື່ອປັບໃຫ້ສົມດຸລ ເວລານັ່ງໄປດົນໆຈຶ່ງບໍ່ເໝື່ອຍ ແລະມຶນຂາ, ຢືດຕົວໃຫ້ຕົງ, ປ່ອຍຮ່າງກາຍຜ່ອນຄາຍສະບາຍໆ, ເວລາຫາຍໃຈເຂົ້າຈະຮູ້ສຶກເຢັນໆຢູ່ທີ່ປາຍດັງ, ເວລາຫາຍໃຈອອກກໍຈະຮູ້ສຶກອຸ່ນໆທີ່ປາຍດັງ ສຳຫລັບຜູ້ເຖົ້ານັ່ງກັບພື້ນບໍ່ໄດ້ ກໍສາມາດນັ່ງຕັ່ງໄດ້ ຈາກນັ້ນ, ເຮົາກໍເຮັດໃຈເຢັນໆ ຢຸດອະດີດ, ປິດອະນາຄົດ, ກຳນົດເອົາປັຈຈຸບັນ ປ່ອຍວາງທຸກຢ່າງ ບໍ່ວ່າຈະເປັນເລື່ອງງານ, ຫລືເລື່ອງສ່ວນຕົວ ລັບຕາລົງເບົາໆ, ເລືອກເອົາຮູບແບບທີ່ຕົນເອງຖະນັດ ເຊັ່ນ: **ພຸທໂທ, ຍຸບນໍພອງນໍ, ສັມມາອະຣະຫັງ** ຫລືຈະກຳນົດເອົາຕາມແບບອານາປານະສະຕິ ທີ່ພຣະພຸທອົງຕຣັສໄວ້ ທັງ ໔ ຈະຕຸກກະກໍໄດ້ ຄື: ພຽງກຳນົດສັງເກດເບິ່ງລົມຫາຍໃຈເຂົ້າ-ອອກ ເທົ່ານັ້ນ. ເມື່ອເຮົາຫາຍໃຈເຂົ້າຍາວ-ອອກຍາວ, ເຂົ້າສັ້ນ-ອອກສັ້ນ ເຮົາກໍຮູ້ພ້ອມສະເພາະຕົວ ເມື່ອເຮົາໄປຄິດເລື່ອງໃດເລື່ອງນຶ່ງຢູ່ຂ້າງນອກໃຫ້ເຮົາດຶງຈິຕມາຢູ່ໃນປັຈຈຸບັນ, ເພາະທັມມະຊາຕຂອງຈິຕ, ດວງນຶ່ງເກີດຂຶ້ນ ດວງນຶ່ງດັບໄປຕລອດເວລາ, ຫນ້າທີ່ຂອງເຮົາກໍຄືພະຍາຍາມດຶງຈິຕມາຢູ່ໃນປັຈຈຸບັນໃຫ້ໄດ້ຫລາຍທີ່ສຸດ, ເພາະທຸກຄັ້ງທີ່ເຮົາຄິດເລື່ອງຣາວຕ່າງໆບໍ່ວ່າຈະເປັນເລື່ອງຂອງ ອະດີດ, ຫລືອະນາຄົດ ກໍຄືຈິຕເຮົາໄດ້ຫລຸດອອກຈາກລົມຫາຍໃຈ ຫລື ກາຍຂອງເຮົາແລ້ວ ໃຫ້ເຮົາດຶງຈິຕກັບມາຢູ່ທີ່ເດີມ ຄື ລົມຫາຍໃຈເຂົ້າ-ອອກ ເມື່ອເຮົານັ່ງໄປດົນໆຄວາມປິຕິສຸກຈະເກີດຂຶ້ນມາເອງ ເພາະເຮົາຢູ່ໃນປັຈຈຸບັນ, ເຮົາບໍ່ໄດ້ກັງວົນເລື່ອງອະດີດທີ່ຜ່ານມາ, ຫລືອະນາຄົດທີ່ຍັງບໍ່ທັນມາເຖິງ, ເມື່ອເກີດປິຕິສຸກ ແລະຈິຕສງົບແລ້ວໃຫ້ເຮົາຍົກຈິຕຂຶ້ນສູ່ວິປັສສະນາ ຄືພິຈາຣະນາຮ່າງກາຍຂອງເຮົາທຸກຄົນທີ່ເຕັມໄປດ້ວຍກອງທຸກ, ກອງສົກກະປົກ, ເຮົາທຸກຄົນຍ່ອມຕັ້ງຢູ່ໃນ ໄຕຣລັກ ຄື: ທຸກຄົນເກີດມາແລ້ວຕ້ອງພົບກັບຄວາມເຖົ້າ, ເຈັບ ແລະຕ້ອງຕາຍໃນທີ່ສຸດ ຫລືພິຈາຣະນາເຖິງຄວາມຕາຍກໍໄດ້ ເມື່ອພິຈາຣະນາຢ່າງນີ້ໄປເລື້ອຍໆຈະເຮັດໃຫ້ຄວາມໂລບ, ໂກດ, ຫລົງ, ຄວາມຍຶດໝັ້ນຖືໝັ້ນຂອງເຮົາໜ້ອຍລົງ, ແລະເມື່ອວັນໃດວັນນຶ່ງສິ່ງເຫລົ່ານີ້ເກີດຂຶ້ນກັບເຮົາ, ເຮົາຈະທຳໃຈໄດ້ ແລະບໍ່ທຸກຫລາຍ.

ນອກຈາກນັ້ນ, ການນັ່ງສະມາທິນີ້ຍັງໄດ້ອະນິສົງມາກມາຍ ຄືໄດ້ບຸນຫລາຍກວ່າການທຳບຸນທຸກຊະນິດ, ເມື່ອອກຈາກສະມາທິ ເຮົາກໍຄວນແຜ່ເມຕຕາໃຫ້ກັບສັດທັງຫລາຍທັງປວງ ໃຫ້ພວກເຂົາໄດ້ຮັບ ແລະອະນຸໂມທະນາບຸນກັບເຮົາດ້ວຍ.

## 5.13 ຈຸລລະໄຊຍະມຸງຄຸນລາຖາ (ຊັຍນ້ອຍ)

ສຸໂຂ ພຸທທານັງ ອຸປປາໂທ ສຸຂາ ສັທທັມມະເທສະນາ ສຸຂາ, ສັງຄັສສະ ສາມັຄຄີ ສາມັຄຄານັງ ຕະໂປ ສຸໂຂ ທີວາ, ຕະປະຕິ ອາທິຈໂຈ ຣັຕຕິງ ອາພາຕິ ຈັນທິມາ ສັນນັທໂທ, ຂັຕຕິໂຍ ຕະປະຕິ ຊາຍີ ຕະປະຕິພຣາມມະໂນ ອະຖະ, ສັພພະມະໂຫຣັຕຕິງ ພຸທໂທ ຕະປະຕິ ເຕຊະສາ ທີຣິໂອຕຕັປປະ, ສັມປັນນາ ສຸກາ ທັມມາ ສະມາຫິຕາ ສັນໂຕ ສັປປຸຣິສາ ໂລເກ, ເທວາທັມມາຕິ ວຸຈຈະເຣ ສັນຕິປັກຂາ ອະປັຕຕະນາ ສັນຕິປາທາ, ອະວັນຈະນາ ມາຕາປິຕາ ຈະ ນິກຂັນຕາ ຊາຕະເວທະປະຕິກາກະມະ, ສຸວັນນະພູມິງ ຄັນຕະວານະ ໂສນຸຕຕະຣາ ມະຫິທທິກາ ປີສາເຈ, ນິທທະມິຕຕະວານະ ພຣັມມະຊາລັງ ອາເທເສຍຍຸງ ເອເຕ ສັພເພ ຍັກຂາ ປະລາຍັນຕຸ ໆ

ອາກາສັຕຖາ ຈະ ພຸມມັຕຖາ ເທວະນາຄາ ມະຫິທທິກາ, ປຸນຍັງ ໂນ ອະນຸໂມທັນຕຸ ຈີຣັງ ຣັກຂັນຕຸ “ສາສະນັງ”

ອາກາສັຕຖາ ຈະ ພຸມມັຕຖາ ເທວະນາຄາ ມະຫິທທິກາ, ປຸນຍັງ ໂນ ອະນຸໂມທັນຕຸ ຈີຣັງ ຣັກຂັນຕຸ “ ປານິໂນ ”

ອາກາສັຕຖາ ຈະ ພຸມມັຕຖາ ເທວະນາຄາ ມະຫິທທິກາ, ປຸນຍັງ ໂນ ອະນຸໂມທັນຕຸ ຈີຣັງ ຣັກຂັນຕຸ “ ໂນສະທາ ”

ອາກາສັຕຖາ ຈະ ພຸມມັຕຖາ ເທວະນາຄາ ມະຫິທທິກາ, ປຸນຍັງ ໂນ ອະນຸໂມທັນຕຸ ໂສຕຖິງ ຄັຈສັນຕຸ ເທວະຕາ ຄະຕາ ໆ

### ພຣະຄາຖາ ນະໂມເມ

ນະໂມ ເມ ພຸທທະ ເຕຊັສສາ ຣະຕະນັຕຕະຍະ ທັມມິກາ

ເຕຊະ ປະສິທທິ ປະສີ ເທວາ ນາຣາຍະ ປະຣະເມສະວະຣາ

ສິຫຫິ ພຣັມມາ  ຈະ  ອິນທາ ຈະ ຈະຕຸໂລກາ ພິຣັກຂະກາ

ສະມຸທທາ ພູຕະ ຄັງຄາ ຈະ ສັພພະ ຊັຍຍະ ສິຫຫິ ພະວັນຕຸ ເຕ,

ຊັຍຍະ ຊັຍຍະ ທະຣະນີ ທະຣະນີ ອຸທະທິ ອຸທະທີ ນະທີ ນະທີ,

ຊັຍຍະ ຊັຍຍະ ຄັກຄະນະ ຕະລະນິສັຍນິລັຍສັຍເສລ ສຸເມຣຸຣາຊະ ພະນະຣະຊີ,

ຊັຍຍະ ຊັຍຍະ ຄັມພີຣະ ໂສພພີ ນາເຄນທະ ນາຄີ ປີສາ ຈະ ພູຕະກາລີ,

ຊັຍຍະ ຊັຍຍະ ທຸນນິມິຕຕະ ໂຣຄີ,  ຊັຍຍະ ຊັຍຍະ ສິງຄີສຸຕທາ ຄານະມຸຂະຊາ,

ຊັຍຍະ ຊັຍຍະ ຣຸນນະມຸຂະສາຕຣາ, ຊັຍຍະ ຊັຍຍະ ຈັມປາທິນາຄະກຸຣະຄັນຖະກັງ,

ຊັຍຍະ ຊັຍຍະ ຄະຊະຄະນະຕຸຣັງຄະນະ  ສຸກະຣະພູຊັງຄະ ສີຫະພະຍັຄຄະທີປາ,

ຊັຍຍະ ຊັຍຍະ ຣຸນນະມຸຂະຍາຕຣາ ຊິນະ ເສນາຣິປູ ປຸນະສຸຕທິຣະຕິ,

ຊັຍຍະ ຊັຍຍະ ສຸຂາ ສຸຂາ ຊີວີ, ຊັຍຍະ ຊັຍຍະ ທະຣະນີຕະເລ ສະທາ ສຸຊັຍຍາ,

ຊັຍຍະ ຊັຍຍະ  ທະຣະນີ ສານຕິ ສະທາ, ຊັຍຍະ ຊັຍຍະ ມັງກະ ຣາລະຍາ ພະວັຄເຄ,

ຊັຍຍະ ຊັຍຍະ ວະຣຸ ນະຍັກເຂ,  ຊັຍຍະ ຊັຍຍະ ຣັກຂະເສ ສຸຣະພູ ຊະເຕຊາ,

ຊັຍຍະ ຊັຍຍະ ພຣັມເມນ ທະຄະນາ,  ຊັຍຍະ ຊັຍຍະ ຣາຊາທິຣາຊະ ຊະຍັງ,

ຊັຍຍະ ຊັຍຍະ ປະຖະວີ ສັພພັງ, ຊັຍຍະ ຊັຍຍະ ອະຣະຫັນຕັງ ປັຈເຈກະພຸທທະສາວັງ,

ຊັຍຍະ ຊັຍຍະ ມະເຫສຸຣັງຄະ ຫະໂຣຫະອິນທະ ເທວາ,   ຊັຍຍະ ຊັຍຍະ ພຣັມມາສຸຣັກໂຂ,

ຊັຍຍະ ຊັຍຍະ ນາໂຄ ວິຣຸລຫະໂກ ວິຣູປັກໂຂຈະ ຈັນທິມາ ຣະວິອິນໂທ ຈະ ເວນັຕຕັຍໂຍ ຈະ

ກຸເວໂຣ ວະຣຸໂນປິ ຈະ ອັຄຄີວາໂຍ ຈະ ປາຊຸນນະໂທ ກຸມາໂຣ ທະຕະຣັຕຖະໂກ ອັຕຖາຣະສະ

ມະຫາເທວາ ສິຫຫິຕາປະສະ ອາທະໂຍ ເອສິໂນ ສາວະກາ ສັພເພ ຊັຍຍະລາໂພ ພະວັນຕຸ ໂນ,
ຊັຍຍະ ທັມໂມ ຈະ ສັງໂຄ ຈະ ທະສະປາໂລ ຈະ ຊັຍຍະ ຊັຍຍະກັງ,
ເອເຕນະ ຊັຍຍະ ເຕຊະນະ ໂສຕຖີ ພະວັນຕຸໂນ, ເອເຕນະ ພຸທທະເຕຊະນະ ໂຫນຕຸ ໂນ ຊັຍຍະ ມັງຄະລັງ.
ຊັຍໂຍປີ ພຸທທັສສະ ສິຣິມະໂຕ ອະຍັງ ມາຣັສສະ ຈະ ປາປິ ມະໂຕ ປະຣາຊະໂຍ ອຸກໂຄ ສັຍຍຸງ ໂພທິມັນເທ ປະໂມທິຕາ
ຊັຍຍະ ຕະທາ " ພຣັມມະຄະນາ " ມະເຫສິໂນ,
ຊັຍໂຍປີ ພຸທທັສສະ ສິຣິມະໂຕ ອະຍັງ ມາຣັສສະ ຈະ ປາປິ ມະໂຕ ປະຣາຊະໂຍ ອຸງໂຄ ສັຍຍຸງ ໂພທິມັນເທ ປະໂມທິຕາ
ຊັຍຍະ ຕະທາ " ອິນທະຄະນາ " ມະເຫສິໂນ,
ຊັຍໂຍປີ ພຸທທັສສະ ສິຣິມະໂຕ ອະຍັງ ມາຣັສສະ ຈະ ປາປິ ມະໂຕ ປະຣາຊະໂຍ ອຸງໂຄ ສັຍຍຸງ ໂພທິມັນເທ ປະໂມທິຕາ
ຊັຍຍະ ຕະທາ " ເທວະຄະນາ " ມະເຫສິໂນ,
ຊັຍໂຍປີ ພຸທທັສສະ ສິຣິມະໂຕ ອະຍັງ ມາຣັສສະ ຈະ ປາປິ ມະໂຕ ປະຣາຊະໂຍ ອຸງໂຄ ສັຍຍຸງ ໂພທິມັນເທ ປະໂມທິຕາ
ຊັຍຍະ ຕະທາ " ສຸປັນນະຄະນາ " ມະເຫສິໂນ,
ຊັຍໂຍປີ ພຸທທັສສະ ສິຣິມະໂຕ ອະຍັງ ມາຣັສສະ ຈະ ປາປິ ມະໂຕ ປະຣາຊະໂຍ ອຸງໂຄ ສັຍຍຸງ ໂພທິມັນເທ ປະໂມທິຕາ
ຊັຍຍະ ຕະທາ " ນາຄະຄະນາ " ມະເຫສິໂນ,
ຊັຍໂຍປີ ພຸທທັສສະ ສິຣິມະໂຕ ອະຍັງ ມາຣັສສະ ຈະ ປາປິ ມະໂຕ ປະຣາຊະໂຍ ອຸງໂຄ ສັຍຍຸງ ໂພທິມັນເທ ປະໂມທິຕາ
ຊັຍຍະ ຕະທາ " ສັພພະຄະນາ " ມະເຫສິໂນ,
ຊະຍັນໂຕ ໂພທິຍາ ມູເລ ສັກກະຍານັງ ນັນທິວັຕທະໂນ ເອວັງ ຕະວັງ ວິຊະໂຍ ໂຫຫິ ຊະຍັສສຸຊະຍະມັງ ຄະເລ
ອະປະຣາ ຊິຕະປັລລັງເກ ສີເສ ປະຖະວິໂປກຂະເຣ ອະພິເສເກ ສັພພະພຸທທານັງ ອັກຄັປປັຕໂຕ ປະໂມທະຕິ
ສຸນັກຂັຕຕັງ ສຸມັງຄະລັງ ສຸປະພາຕັງ ສຸຫຸດຖິຕັງ ສຸຂະໂນ ສຸມຸຫຸຕໂຕ ຈະ ສຸຍິຕຖັງ ພຣັມມະຈາຣີສຸ
ປະທັກຂີນັງ ກາຍະກັມມັງ ວາຈາກັມມັງ ປະທັກຂີນັງ ປະທັກຂີນັງ ມະໂນກັມມັງ ປະນີທີ ເຕ ປະທັກຂີນາ

ປະທັກຂິນາ ນິກັຕຕະວານະ ລະພັນຕັຕເຖ ປະທັກຂິເນ
ເຕ ອັຕຖະລັທທາ ສຸຂິຕາ ວິຣູລຫາ ພຸທທະສາສະເນ ອະໂຣຄາ ສຸຂິຕາ ໂຫຖະ ສະຫະ ສັພເພຫິ ຍາຕິພິ
ສຸນັນຕຸ ໂພນໂຕ ເຍ ເທວາ ອັສສະມິງ ຖາເນ ອະທິຄະຕາ ທີຄາຍຸກາ ສະທາ ໂຫນຕຸ ສຸຂິຕາ ໂຫນຕຸ ສັພພະທາ
ຣັກຂັນຕຸ ສັພພະສັຕຕານັງ ຣັກຂັນຕຸ ຊິນະສາສະນັງ ຍາກາຈິ ປັຕຖະນາ ເຕສັງ ສັພເພ ປູເຣນຕຸ ມະໂນຣະຖາ
ຍຸຕຕະກາເລ ປະວັສສັນຕຸ ວັສສັງ ວັສສາວະຣາຫະກາ ໂຣຄາ ຈຸປັທທະວາ ເຕສັງ ນິວາເຣນຕຸ ຈະ ສັພພະທາ ກາຍະສຸຂັງ
ຈິຕຕະສຸຂັງ ອາທະຣັນຕຸ, ( ຍະຖາຣະຫັງ ອິຕິ ຈຸລລະຊັຍຍະ ປະກະຣະນັງ ສະມັຕຖັງ ນິຕຖິຕັງ).

**ຄໍາແປ:** ບົດສູດພັລນາຊັຍຊນະຂອງພຣະພຸທເຈົ້າ ເໜືອໝູ່ມາຣທັ້ງປວງ ທັງລ່ວງພົ້ນອໍານາດທ້າວຈະຕຸໂລກະບານທັ້ງ4 ແລະເປັນຊັຍຊນະເໜືອ ເທວະດາທຸກໆຊັ້ນ ທັ້ງເປັນຊັຍຊນະອະມະນຸສ ຍັກ ພູດຜີປີສາດ ອາວຸທທັ້ງຫລາຍ ກໍທໍາອັນຕະລາຍບໍ່ໄດ້ ທັ້ງຊັຍຊນະ ພຍານາຄ ທັ້ງພຣະຈັນ ພຣະອາທິດ ພຣະອິນ ພຣະພົຣົມ ທັ້ງລົມ ແລະ ໄຟ ກໍທໍາອັນຕະລາຍບໍ່ໄດ້, ຂໍເທວະດາຜູ້ມີສັກໃຫຍ່ 18 ພຣະອົງຄ໌ ຈົ່ງມາຮັກສາ ທັ້ງພຣະລືສີ ພຣະສາວົກ ພຣະທັມ ພຣະສົງຄ໌ ຈົ່ງມາອວຍຊັຍ ຂໍຄວາມສວັສດີຈົ່ງມີແດ່ທ່ານ ດ້ວຍເດຊແຫ່ງພຣະຣັຕນະຕຣັຍ ໃນຄັ້ງນັ້ນ ມາຣຜູ້ຊົ່ວຊ້າໄດ້ພ່າຍແພ້ຕໍ່ພຣະຣັສມີ ຂອງພຣະພຸທເຈົ້າ ຄຣັ້ນແລ້ວ ພຣະອົງກໍຊົງຕຣັສຮູ້ໂດຍຊອບ ພຣະພົຣົມ ພຣະອິນ ເທວະດາທັ້ງຫລາຍຜູ້ມີເດຊານຸພາບ ທັ້ງໝູ່ພຍານາກ ໝູ່ພຣະຍາຄຣຸທ ຜູ້ມີສັກດາຍິ່ງໃຫຍ່ ຕ່າງຊື່ນຊົມຊອບໃຈໃນຊັຍຊນະຂອງພຣະພຸທເຈົ້າ ຕໍ່ໜ້າໝູ່ມາຣ ນະ ໂພທິບັນລັງ ເປັນຊັຍຊນະທີ່ເປັນອຸດົມມຸງຄຸນ ທັ້ງເປັນເລີກງານຍາມດີ ແລະ ຂນະດີທີ່ໄດ້ປະກາດ ພຣົມມະຈັນອັນບໍຣິສຸທຂອງອົງພຣະສັມມາສັມພຸທເຈົ້າ, ຂໍຄວາມສວັສດີມີຊັຍ ຈົ່ງມີແກ່ທ່ານດ້ວຍເດຊແຫ່ງຄຸນພຣະຣັຕນະຕຣັຍ ຂໍໃຫ້ທ່ານຈົ່ງໄດ້ຮັບປໂຍດ ແລະ ຄວາມສຸກ ທັ້ງຈະເຣີນຮຸ່ງເຮືອງໃນພຣະພຸທສາສນາ ຂໍໃຫ້ມີອາຍຸຍືນຍາວ ປາຖນາສິ່ງນຶ່ງປະການໃດ ຂໍໃຫ້ໄດ້ດັ່ງໃຈປະສົງ ແລະປາສຈາກໂຣຄພັຍທັ້ງຫລາຍ ທັ້ງປວງ ທັ້ງຫ່າງໄກຄວາມທຸກ ຂໍໃຫ້ປະສົບສຸກທັ້ງກາຍແລະໃຈ.

# 5.14 ນະມັສການພຣະອໍຣະຫັນ 8 ທິສ

(ທັນທະ ມະຍັງ ສະຣະພັນເຍນະ ພຸທທະມັງຄະລະ ຄາຖາໂຍ ພະນາມະ ເສ)

ສັມພຸທໂທ ທິປະທັງ ເສຕໂຖ ນິສິນໂນ ເຈວະ ມັຊຊິເມ

ໂກນທັນໂຍ ປຸພພະພາເຄ ຈະ ອາຄະເນຍເຍ ຈະ ກັສສະໂປ; ສາຣີປຸຕໂຕ ຈະ ທັກຂິເນ ຫະຣະຕິເຍ ອຸປາລີ ຈະ

ປັຈສິມເມປີ ຈະ ອານັນໂທ ພາຍັພເພ ຈະ ຄະວັມປັຕຕິ; ໂມຄຄັລລາໂນ ຈະ ອຸຕຕະເຣ ອີສາເນປີ ຈະ ຣາຫຸໂຣ

ອິເມ ໂຂ ມັງຄະລາ ພຸທທາ ສັພເພ ອິທະ ປະຕິຕຖິຕາ; ວັນທິຕາ ເຕ ຈະ ອັມເຫຫິ ສັກກາເຣຫິ ຈະ ປູຊິຕາ

ເອເຕສັງ ອານຸພາເວນະ ສັພພະໂສຕຖີ ພະວັນຕຸ ໂນໆ

| | | | |
|---|---|---|---|
| ອິຈເຈວະມັຈຈັນ | ຕະນະມັສສະເນຍຍັງ | ນະມັສສະມາໂນ | ຣະຕະນັຕຕະຍັງ ຍັງ |
| ປຸນຍາພິສັນທັງ | ວິປຸລັງ ອະລັຕຖັງ | ຕັສສານຸພາເວນະ | ຫະຕັນຕະຣາໂຍ. |

<u>ຄຳແປ :</u> ສົມເດັດພຣະສັມມາສັມພຸທທະເຈົ້າ ຜູ້ປະເສີດກວ່າສັຕສອງເທົ້າ ຊົງປະທັບນັ່ງຢູ່ທ່າມກາງ ມີ

ທ່ານພຣະອັນຍາໂກນທັນຍະ ຢູ່ທາງທິສບູຣະພາ(ຕະເວັນອອກ);

ທ່ານພຣະມະຫາກັສສະປະ ຢູ່ທາງທິສອາຄະເນ(ຕະເວັນອອກສ່ຽງໃຕ້); ທ່ານພຣະສາຣີບຸຕ ຢູ່ທາງທິສທັກສິນ (ໃຕ້)

ທ່ານພຣະອຸບາລີ ຢູ່ທາງທິສຫໍຣະດີ (ຕະເວັນຕົກສ່ຽງໃຕ້ ); ທ່ານພຣະອານົນ ຢູ່ທາງທິສປັຈສິມ (ຕະເວັນຕົກ)

ທ່ານພຣະພະຄະວັມປະຕິ ຢູ່ທາງທິສພາຍັພ (ຕະເວັນຕົກສ່ຽງເໜືອ ); ທ່ານພຣະໂມກຄັລລານະ ຢູ່ທາງທິສອຸດອນ (ເໜືອ)

ທ່ານພຣະຣາຫຸລ ຢູ່ທາງທິສອີສານ(ຕະເວັນອອກສ່ຽງເໜືອ)

ດ້ວຍສັພພະນຸງຄຸນອັນພຣະອະຣິຍະເຈົ້າທັງຫລາຍຜູ້ປະດິສຖານຢູ່ນະທິສທັງຫລາຍເຫລົ່ານີ້ ທີ່ພວກເຮົາທັງຫລາຍທໍາການກາບໄຫວ້ ສັກກາຣະ ບູຊາ ຊຶ່ງທ່ານຜູ້ປະເສີດທັງຫລາຍເຫລົ່ານັ້ນ ຂໍຄວາມສວັສດີຈົ່ງມີແກ່ພວກເຮົາທັ້ງຫລາຍ.

ຂ້າພະເຈົ້າຂໍນອບນ້ອມ ນະມັສກາຣ ຊຶ່ງພຣະຣັຕຕະນະຕຣັຍ ແລະດ້ວຍການນະມັສກາຣພຣະອະຣິຍະສາວົກເຈົ້າທັ້ງຫລາຍນີ້ ຂ້າພະເຈົ້າໄດ້ຮັບແລ້ວຊຶ່ງຄວາມຫລັ່ງໄຫລຂອງບຸນຢ່າງໄພບູລ (ບຸນທີ່ເກີດຈາກການລະລຶກເຖິງພຣະອໍຣະຫັນທັ້ງແປດທິສ) ດ້ວຍອານຸພາບແຫ່ງພຣະຣັຕຕະນະຕຣັຍນັ້ນ ຂໍອັນຕະຣາຍທັ້ງຫລາຍຈົ່ງເຖິງຄວາມພິນາສສິ້ນໄປເທີ້ນ.

## 5.16 ພຣະຄາຖາມະຫາຈັກກະພັດ

**ນະໂມພຸທທາຍະ ພຣະພຸທທະ ໄຕຣຣັຕຕະນະຍານ, ມະນີນົພພະຣັຕ, ສີສະຫັສສະ ສຸທັມມາ,**
